ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 02 ສປຢ

ນະຄອນຫຼວງວຽງຈັນ, ວັນທີ 16.01.2007.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານທຸລະກິດ.

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ ທີ່ສະພາແຫ່ງຊາດໄດ້ຕົກລົງ ຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທະນາຄານທຸລະກິດ ;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 02/ຄປຈ, ລົງວັນທີ 10 ມັງກອນ 2007.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານທຸລະກິດ .

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປລາວ.

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 03 /ສພຊ

# ມະຕິຕົກລົງ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາ
## ກົດໝາຍວ່າດ້ວຍ ທະນາຄານທຸລະກິດ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ໃນວາລະປະຊຸມຕອນແລງຂອງວັນທີ 26 ທັນວາ 2006;

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ທະນາຄານທຸລະກິດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 26 ທັນວາ 2006

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---=== 000 ===---

ສະພາແຫ່ງຊາດ

ເລກທີ 03 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 26 ທັນວາ 2006

# ກົດໝາຍ
# ວ່າດ້ວຍທະນາຄານທຸລະກິດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍທະນາຄານທຸລະກິດ ກຳນົດ ຫຼັກການ, ລະບຽບການກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ ແລະການຕິດຕາມກວດກາທະນາຄານທຸລະກິດ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອສົ່ງເສີມໃຫ້ທະນາຄານທຸລະກິດ ເຄື່ອນໄຫວຢ່າງມີປະສິດທິພາບ, ໝັ້ນຄົງ, ໂປ່ງໃສ, ສະໜອງທຶນເຂົ້າສູ່ການຜະລິດ, ທຸລະກິດ, ປະກອບສ່ວນອັນສຳຄັນໃນການຮັກສາສະຖຽນລະພາບເງິນຕາ ແລະ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2. ທະນາຄານທຸລະກິດ**

ທະນາຄານທຸລະກິດ ແມ່ນວິສາຫະກິດ ທີ່ຖືກສ້າງຕັ້ງຂຶ້ນຕາມກົດໝາຍສະບັບນີ້ ຊຶ່ງດຳເນີນທຸລະກິດການທະນາຄານ ເປັນຕົ້ນ ການລະດົມເງິນຝາກ ເພື່ອສະໜອງສິນເຊື່ອ, ຊື້-ຂາຍເງິນຕາຕ່າງປະເທດ, ໃຫ້ບໍລິການຊຳລະ ແລະລົງທຶນ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ທຸລະກິດການທະນາຄານ ໝາຍເຖິງ ທຸລະກິດເງິນຕາ ໂດຍຖືເອົາການລະດົມເງິນຝາກ ແລະການນໍາໃຊ້ແຫຼ່ງທຶນທີ່ລະດົມໄດ້ເພື່ອສະໜອງສິນເຊື່ອ, ຊື້-ຂາຍເງິນຕາຕ່າງປະເທດ, ໃຫ້ບໍລິການຊໍາລະ ແລະລົງທຶນ;
2. ການສະໜອງສິນເຊື່ອ ໝາຍເຖິງ ການໃຫ້ກູ້ຢືມ, ການຄໍ້າປະກັນ, ການຊື້, ການຊື້ຫຼຸດ, ຮັບຊ່ວງຊື້ຫຼຸດ ແລະ ອື່ນໆ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ;
3. ເງິນຝາກ ໝາຍເຖິງ ຈໍານວນເງິນ ທີ່ລູກຄ້ານໍາມາຝາກໄວ້ໃນບັນຊີເງິນຝາກຂອງຕົນຢູ່ທະນາຄານທຸລະກິດ;
4. ທຶນ ໝາຍເຖິງ ຜົນລົບລະຫວ່າງຊັບສິນ ແລະໜີ້ສິນ ຕາມໃບສະຫຼຸບຊັບສິນບັດຂອງທະນາຄານທຸລະກິດ;
5. ສໍານວນເອກະສານສິນເຊື່ອ ໝາຍເຖິງ ເອກະສານທີ່ຕິດພັນກັບສັນຍາ ກ່ຽວກັບການສະໜອງສິນເຊື່ອ ຊຶ່ງຕົ້ນຕໍປະກອບດ້ວຍ: ບົດລາຍງານຖານະການເງິນຂອງຜູ້ກູ້ຢືມ, ບົດລາຍງານຖານະການເງິນຂອງຜູ້ຄໍ້າປະກັນ, ລາຍລະອຽດຂອງຫຼັກຊັບຄໍ້າປະກັນແລະການຕີລາຄາມູນຄ່າຫຼັກຊັບຄໍ້າປະກັນ (ຖ້າມີ), ລາຍລະອຽດກ່ຽວກັບເງື່ອນໄຂຂອງການສະໜອງສິນເຊື່ອ ແລະ ເອກະສານອະນຸມັດສິນເຊື່ອ;
6. ທຶນຕາມລະບຽບການ ໝາຍເຖິງ ທຶນທີ່ກໍານົດ ໂດຍທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ ເພື່ອຮັບປະກັນຄວາມໝັ້ນຄົງຂອງທະນາຄານທຸລະກິດ;
7. ຜົນປະໂຫຍດຈາກການຖືຮຸ້ນ ໝາຍເຖິງ ສິດໃນການເປັນເຈົ້າກໍາມະສິດ ໃນທຶນຈົດທະບຽນຕາມຮຸ້ນຂອງຕົນ, ສິດໃນການລົງຄະແນນສຽງ, ສິດໃນການດໍາເນີນການໃດໜຶ່ງ, ສິດໄດ້ຮັບເງິນປັນຜົນໃນບ່ອນທີ່ຕົນຖືຮຸ້ນ;
8. ຜູ້ຖືຮຸ້ນລາຍໃຫຍ່ ໝາຍເຖິງ ບຸກຄົນທີ່ເປັນເຈົ້າຂອງຮຸ້ນ ໂດຍທາງກົງ ຫຼື ທາງອ້ອມ ແຕ່ສິບສ່ວນຮ້ອຍຂຶ້ນໄປ ຂອງຈໍານວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້;
9. ຜົນປະໂຫຍດສໍາຄັນ ໝາຍເຖິງ ຜົນປະໂຫຍດທີ່ໄດ້ຈາກການຖືຮຸ້ນ ຊຶ່ງສາມາດລົງຄະແນນສຽງໄດ້ ຫຼື ຜົນປະໂຫຍດທີ່ເຮັດໃຫ້ສາມາດໃຊ້ສິດໄດ້ ໃນລະດັບທີ່ມີຜົນກະທົບຕໍ່ການບໍລິຫານຈັດການ ຫຼື ການກໍານົດນະໂຍບາຍໃນນິຕິບຸກຄົນ ຫຼື ການດໍາເນີນການໃດໜຶ່ງ;
10. ການແບ່ງປັນທຶນ ໝາຍເຖິງ ການແບ່ງປັນເງິນສົດ ຫຼື ຊັບສິນຂອງທະນາຄານທຸລະກິດໃຫ້ແກ່ເຈົ້າຂອງກໍາມະສິດ ໂດຍອີງໃສ່ອັດຕາສ່ວນກໍາມະສິດຂອງພວກກ່ຽວ, ແຕ່ຈະບໍ່ລວມເອົາການແບ່ງປັນຮຸ້ນທີ່ມີຢູ່ໃນທະນາຄານທຸລະກິດ ຫຼື ສິດໃນການຊື້ຮຸ້ນດັ່ງກ່າວ;
11. ສະມາຊິກສະພາບໍລິຫານຈາກພາຍນອກ ໝາຍເຖິງ ສະມາຊິກສະພາບໍລິຫານ ທີ່ບໍ່ແມ່ນຜູ້ບໍລິຫານ ແລະ ຜູ້ຈັດການຝ່າຍຕ່າງໆຂອງທະນາຄານທຸລະກິດ ແລະ ບໍ່ແມ່ນບຸກຄົນກ່ຽວຂ້ອງທາງສາຍພົວພັນຄອບຄົວ, ການວ່າຈ້າງ ຫຼື ມີຜົນປະໂຫຍດທາງດ້ານທຸລະກິດກັບຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ບໍລິຫານຂອງທະນາຄານທຸລະກິດນັ້ນ;

12. ສາຂາ ໝາຍເຖິງ ພາກສ່ວນໜຶ່ງຂອງທະນາຄານທຸລະກິດພາຍໃນ ຫຼື ຕ່າງປະເທດ ທີ່ດຳເນີນທຸລະກິດການທະນາຄານທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ຕາມການມອບໝາຍ ຂອງທະນາຄານ ທຸລະກິດນັ້ນ;
13. ຜູ້ບໍລິຫານ ໝາຍເຖິງ ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່, ຜູ້ອຳນວຍການດ້ານການເງິນ ແລະ ຜູ້ຈັດການຝ່າຍຕ່າງໆຂອງທະນາຄານທຸລະກິດ;
14. ຜູ້ກ່ຽວຂ້ອງ ໝາຍເຖິງ ຜູ້ບໍລິຫານ, ຜູ້ຖືຮຸ້ນລາຍໃຫຍ່, ບຸກຄົນ ທີ່ມີສາຍພົວພັນຜົວ-ເມຍ, ຍາດສາຍຕັ້ງ, ບຸກຄົນຜູ້ທີ່ມີຜົນປະໂຫຍດທາງດ້ານທຸລະກິດ ກັບຜູ້ບໍລິຫານຂອງທະນາຄານທຸລະກິດ ຫຼື ຜູ້ຖືຮຸ້ນລາຍໃຫຍ່ ລວມທັງບຸກຄົນທີ່ມີຜົນປະໂຫຍດສຳຄັນຢູ່ໃນນິຕິບຸກຄົນອື່ນ ຊຶ່ງທະນາຄານທຸລະກິດດັ່ງກ່າວມີຜົນປະໂຫຍດສຳຄັນ;
15. ໃບອະນຸຍາດສ້າງຕັ້ງ ໝາຍເຖິງ ເອກະສານຮັບຮອງສິດ ທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງທະນາຄານທຸລະກິດ ເພື່ອດຳເນີນທຸລະກິດການທະນາຄານ ແລະ ທຸລະກິດດ້ານການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ແລະ 42 ຂອງກົດໝາຍສະບັບນີ້;
16. ບໍລິສັດໃນກຸ່ມ ໝາຍເຖິງ ບໍລິສັດທີ່ທະນາຄານທຸລະກິດຖືຮຸ້ນ ໃນຈຳນວນພຽງພໍ ແລະ ມີອຳນາດຄວບຄຸມບໍລິຫານຈັດການທຸລະກິດຂອງບໍລິສັດນັ້ນ;
17. ສາຂາທະນາຄານທຸລະກິດຕ່າງປະເທດ ໝາຍເຖິງ ພາກສ່ວນໜຶ່ງຂອງທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດການທະນາຄານ ຢູ່ ສປປ ລາວ ຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບທະນາຄານທຸລະກິດ**

ລັດ ຊຸກຍູ້, ສົ່ງເສີມໃຫ້ບຸກຄົນ ແລະການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ສ້າງຕັ້ງທະນາຄານທຸລະກິດ ຫຼື ເຂົ້າຮ່ວມໃນການດຳເນີນທຸລະກິດການທະນາຄານ ດ້ວຍການວາງນະໂຍບາຍ, ລະບຽບການ, ມາດຕະການ, ການສະໜອງຂໍ້ມູນຂ່າວສານ ແລະຄວາມສະດວກອື່ນໆ ເພື່ອພັດທະນາຂະແໜງການທະນາຄານໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ.

ລັດ ສົ່ງເສີມໃຫ້ທະນາຄານທຸລະກິດ ລົງທຶນ ແລະສະໜອງສິນເຊື່ອ ເພື່ອຊຸກຍູ້ການຜະລິດ, ທຸລະກິດ, ສ້າງວຽກເຮັດງານທຳ ເພີ່ມລາຍໄດ້ຂອງປະຊາຊົນ, ສ້າງພື້ນຖານໃຫ້ແກ່ການຫັນເປັນອຸດສາຫະກຳ ແລະທັນສະໄໝ, ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 5. ການປົກປ້ອງສິດຜົນປະໂຫຍດຂອງຜູ້ຝາກເງິນ**

ທະນາຄານທຸລະກິດ ຕ້ອງປົກປ້ອງສິດຜົນປະໂຫຍດຂອງຜູ້ຝາກເງິນ ດ້ວຍການ:

1. ເຂົ້າເປັນສະມາຊິກຂອງກອງທຶນປົກປ້ອງຜູ້ຝາກເງິນ;

2. ສ້າງເງື່ອນໄຂເພື່ອອຳນວຍຄວາມສະດວກ ໃນການຝາກ ແລະ ຖອນເງິນຂອງລູກຄ້າ ທັງຕົ້ນທຶນ ແລະ ດອກເບ້ຍ ຢ່າງຄົບຖ້ວນ ແລະ ທັນເວລາ;
3. ຮັກສາຄວາມລັບກ່ຽວກັບບັນຊີເງິນຝາກຂອງລູກຄ້າ ເວັ້ນເສຍແຕ່ກົດໝາຍ ຫາກໄດ້ກຳນົດໄວ້ຢ່າງອື່ນ;
4. ແຈ້ງອັດຕາດອກເບ້ຍເງິນຝາກ, ຄ່າບໍລິການ ແລະອັດຕາແລກປ່ຽນຢ່າງເປີດເຜີຍ ດ້ວຍຮູບການຕ່າງໆ.

**ມາດຕາ 6. ຄວາມສະເໝີພາບໃນການດຳເນີນທຸລະກິດ**

ບັນດາທະນາຄານທຸລະກິດທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ໃນການຮ່ວມມື ແລະ ແຂ່ງຂັນ ເພື່ອຂະຫຍາຍການຜະລິດ, ທຸລະກິດ.

ລັດ ຄຸ້ມຄອງທະນາຄານທຸລະກິດຢ່າງເປັນເອກະພາບ ບົນພື້ນຖານລະບຽບກົດໝາຍແລະ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງທະນາຄານທຸລະກິດ.

ລັດ ບໍ່ອະນຸຍາດໃຫ້ທະນາຄານທຸລະກິດ ເຄື່ອນໄຫວແກ່ງແຍ່ງແຂ່ງຂັນກັນຢ່າງຜິດກົດໝາຍ ທີ່ສ້າງຜົນເສຍຫາຍຕໍ່ທະນາຄານທຸລະກິດອື່ນ, ລະບົບທະນາຄານ ຫຼື ນະໂຍບາຍການເງິນ-ເງິນຕາຂອງລັດ.

**ມາດຕາ 7. ຄວາມເປັນເອກະລາດໃນການດຳເນີນທຸລະກິດ**

ທະນາຄານທຸລະກິດ ມີຄວາມເປັນເອກະລາດໃນການດຳເນີນທຸລະກິດຂອງຕົນ ບົນພື້ນຖານກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 8. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ຕໍ່ທະນາຄານທຸລະກິດ ລວມທັງສາຂາທະນາຄານທຸລະກິດ ຕ່າງປະເທດທີ່ສ້າງຕັ້ງ ແລະເຄື່ອນໄຫວຢູ່ ສປປ ລາວ.

**ມາດຕາ 9. ການພົວພັນຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືສາກົນ ທາງດ້ານທຸລະກິດການທະນາຄານໃນຫຼາຍຮູບການ ເຊັ່ນ: ການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບພະນັກງານ ເພື່ອໃຫ້ລະບົບທະນາຄານຂອງ ສປປ ລາວ ເຕີບໃຫຍ່ເຂັ້ມແຂງ ແລະສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນໄດ້.

# ພາກທີ II
# ການສ້າງຕັ້ງ ແລະ ໂຄງປະກອບຂອງທະນາຄານ

## ໝວດທີ I
## ການສ້າງຕັ້ງ

**ມາດຕາ 10. ການສະເໜີຂໍສ້າງຕັ້ງ**

ບຸກຄົນ ແລະການຈັດຕັ້ງ ທີ່ມີຈຸດປະສົງຢາກສ້າງຕັ້ງທະນາຄານທຸລະກິດ ຕ້ອງຍື່ນຄຳຮ້ອງຕໍ່ທະນາຄານແຫ່ງ ສປປ ລາວ.

ສຳນວນຄຳຮ້ອງຂໍສ້າງຕັ້ງ ປະກອບດ້ວຍ:

1. ແຜນທຸລະກິດ ແລະ ໂຄງຮ່າງການຈັດຕັ້ງຂອງທະນາຄານທຸລະກິດ;
2. ໃບຢັ້ງຢືນຖານະການເງິນ ແລະຂໍ້ມູນທີ່ຈຳເປັນຂອງຜູ້ຖືຮຸ້ນລາຍໃຫຍ່;
3. ໃບຢັ້ງຢືນຄຸນວຸດທິ, ປະສົບການ, ປະຫວັດໃນການດຳເນີນທຸລະກິດ ແລະວິຊາຊີບ ຂອງຜູ້ບໍລິຫານໃນໄລຍະຫ້າປີຜ່ານມາ;
4. ບັນຊີລາຍຊື່ຂອງຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ;
5. ສຳລັບການດຳເນີນທຸລະກຳທະນາຄານຜ່ານອິນເຕີເນັດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ແລະ 60 ຂອງກົດໝາຍສະບັບນີ້.

ທະນາຄານທຸລະກິດຕ່າງປະເທດ ທີ່ມີຈຸດປະສົງຂໍສ້າງຕັ້ງສາຂາ ຫຼື ບໍລິສັດໃນກຸ່ມຂອງຕົນ ຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນຈາກອົງການທີ່ມີສິດ, ໜ້າທີ່ຂອງປະເທດຕົນເສັຍກ່ອນ.

ຜູ້ຍື່ນຄຳຮ້ອງຂໍອະນຸຍາດສ້າງຕັ້ງ ຕ້ອງເສັຍຄ່າທຳນຽມ ຕາມລະບຽບການ.

ທະນາຄານແຫ່ງ ສປປ ລາວ ມີສິດທວງໃຫ້ຜູ້ຍື່ນຄຳຮ້ອງ ສົ່ງຂໍ້ມູນເພີ່ມເຕີມໃຫ້ແກ່ຕົນ ໃນກໍລະນີທີ່ເຫັນວ່າການສະໜອງຂໍ້ມູນຂອງຜູ້ສະເໜີຂໍສ້າງຕັ້ງບໍ່ສົມບູນ ຫຼື ບໍ່ຄົບຖ້ວນ.

**ມາດຕາ 11. ການພິຈາລະນາຄຳຮ້ອງຂໍສ້າງຕັ້ງ**

ທະນາຄານແຫ່ງ ສປປ ລາວ ຕ້ອງພິຈາລະນາຄຳຮ້ອງຂໍສ້າງຕັ້ງ ແລະແຈ້ງຜົນ ຢ່າງເປັນລາຍລັກອັກສອນ ໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງຊາບ ຢ່າງຊ້າບໍ່ໃຫ້ເກີນເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍສ້າງຕັ້ງເປັນຕົ້ນໄປ.

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດສ້າງຕັ້ງຊົ່ວຄາວ ຖ້າເຫັນວ່າຜູ້ຮ້ອງຂໍສ້າງຕັ້ງມີເງື່ອນໄຂດັ່ງນີ້:

1. ມີແຜນທຸລະກິດທີ່ດີ ແລະ ສົມເຫດສົມຜົນ;
2. ມີເອກະສານຢັ້ງຢືນເງິນລົງທຶນພຽງພໍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້;

3. ມີອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນທີ່ເປັນຈິງ ແລະ ໂປ່ງໃສ;
4. ມີຜູ້ບໍລິຫານ, ຜູ້ຖືຮຸ້ນລາຍໃຫຍ່ ທີ່ມີຄຸນວຸດທິ ແລະປະສົບການເໝາະສົມກັບການດໍາເນີນທຸລະກິດດ້ານການເງິນ-ການທະນາຄານ;
5. ມີໃບອະນຸຍາດລົງທຶນຂອງຄະນະກໍາມະການແຜນການ ແລະ ການລົງທຶນ.

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດສ້າງຕັ້ງຖາວອນ ພາຍໃນກໍານົດສິບວັນລັດຖະການ ນັບແຕ່ວັນທີ່ຜູ້ຂໍສ້າງຕັ້ງປະຕິບັດເງື່ອນໄຂເພີ່ມເຕີມສໍາເລັດເປັນຕົ້ນໄປ.

ເງື່ອນໄຂເພີ່ມເຕີມ ມີດັ່ງນີ້:

1. ມີສັນຍາຮ່ວມທຶນ, ມີກົດລະບຽບ ແລະມີບົດວິພາກເສດຖະກິດ-ເຕັກນິກ ທີ່ສົມເຫດສົມຜົນ;
2. ຜູ້ຖືຮຸ້ນຕ້ອງຖອກເງິນຄ່າຮຸ້ນໃຫ້ຄົບຖ້ວນ ຕາມຈໍານວນຮຸ້ນຂອງຕົນ;
3. ມີພະນັກງານທີ່ໄດ້ມາດຕະຖານ ໃນຈໍານວນພຽງພໍ;
4. ປະກອບວັດຖຸເຕັກນິກ ແລະ ສະຖານທີ່ ເພື່ອຮັບປະກັນໃຫ້ແກ່ການດໍາເນີນງານ;
5. ສ້າງລະບົບດໍາເນີນງານ, ລະບົບກວດສອບ ແລະຄວບຄຸມວຽກງານພາຍໃນ ຢ່າງຄົບຊຸດ.

ຖ້າຜູ້ຂໍສ້າງຕັ້ງຫາກບໍ່ປະຕິບັດເງື່ອນໄຂເພີ່ມເຕີມທີ່ໄດ້ກໍານົດໄວ້ໃນວັກທີ 3 ຂອງມາດຕານີ້ ພາຍໃນກໍານົດ ໜຶ່ງຮ້ອຍແປດສິບວັນ ໃບອະນຸຍາດຊົ່ວຄາວນັ້ນກໍຈະຕົກໄປ. ໃນກໍລະນີທີ່ຜູ້ຂໍສ້າງຕັ້ງຫາກປະຕິບັດເງື່ອນໄຂດັ່ງກ່າວບໍ່ສໍາເລັດ ໂດຍມີເຫດຜົນພຽງພໍແລ້ວ ທະນາຄານແຫ່ງ ສປປ ລາວ ສາມາດຕໍ່ກໍານົດເວລາຂອງໃບອະນຸຍາດສ້າງຕັ້ງຊົ່ວຄາວ ໄດ້ອີກເກົ້າສິບວັນ.

ພາຍຫຼັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ຜູ້ໄດ້ຮັບການສ້າງຕັ້ງ ຕ້ອງເສຍຄ່າທໍານຽມຕາມລະບຽບການ, ໄປແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍ ວິສາຫະກິດ ແລະຕ້ອງເຄື່ອນໄຫວດໍາເນີນທຸລະກິດ ພາຍໃນກໍານົດເວລາ ໜຶ່ງຮ້ອຍແປດສິບວັນ ນັບແຕ່ໄດ້ຮັບໃບທະບຽນຖາວອນ ເປັນຕົ້ນໄປ.

### ມາດຕາ 12. ສິດໃນການອະນຸຍາດສ້າງຕັ້ງ

ທະນາຄານແຫ່ງ ສປປ ລາວ ມີສິດໃນການອອກໃບອະນຸຍາດສ້າງຕັ້ງທະນາຄານທຸລະກິດ ແຕ່ພຽງຜູ້ດຽວ.

### ມາດຕາ 13. ທຶນຈົດທະບຽນຕໍ່າສຸດ ແລະ ເງິນລົງທຶນຕໍ່າສຸດ

ທະນາຄານທຸລະກິດ ທີ່ສ້າງຕັ້ງຂຶ້ນຕາມກົດໝາຍສະບັບນີ້ ຕ້ອງມີທຶນຈົດທະບຽນຕໍ່າສຸດ ໜຶ່ງຮ້ອຍຕື້ກີບ.

ທະນາຄານທຸລະກິດຕ່າງປະເທດ ທີ່ມາສ້າງຕັ້ງສາຂາຢູ່ ສປປ ລາວ ຕ້ອງມີເງິນລົງທຶນຕໍ່າສຸດ ສາຂາລະ ຫ້າສິບຕື້ກີບ.

ລັດຖະບານສາມາດປັບປຸງທຶນຈົດທະບຽນ ແລະເງິນລົງທຶນຕໍ່າສຸດໃນແຕ່ລະໄລຍະໄດ້ ແຕ່ບໍ່ໃຫ້ຫຼຸດຈໍານວນທີ່ໄດ້ກໍານົດໄວ້ໃນມາດຕານີ້.

**ມາດຕາ 14. ກົດລະບຽບຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ຕ້ອງມີກົດລະບຽບຂອງຕົນ ຊຶ່ງມີເນື້ອໃນຕົ້ນຕໍດັ່ງນີ້:

1. ຊື່ ແລະ ທີ່ຕັ້ງສໍານັກງານ;
2. ວັດຖຸປະສົງ;
3. ທຶນຈົດທະບຽນ;
4. ປະເພດຮຸ້ນ, ຈໍານວນຮຸ້ນ ແລະ ສິດໃນການລົງຄະແນນສຽງ;
5. ຊື່, ທີ່ຢູ່ ແລະ ສັນຊາດຂອງຜູ້ສ້າງຕັ້ງ;
6. ການບໍລິຫານຈັດການ;
7. ກອງປະຊຸມ ແລະ ວິທີລົງມະຕິ;
8. ການແບ່ງເງິນປັນຜົນ;
9. ການແກ້ໄຂຂໍ້ຂັດແຍ່ງ;
10. ວິທີການຊໍາລະສະສາງ.

ກົດລະບຽບຂອງທະນາຄານທຸລະກິດ ຈະມີຜົນສັກສິດກໍຕໍ່ເມື່ອມີການຮັບຮອງຢ່າງເປັນລາຍລັກອັກສອນຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 15. ການນໍາໃຊ້ໃບອະນຸຍາດສ້າງຕັ້ງ**

ໃບອະນຸຍາດສ້າງຕັ້ງ ມີຜົນນໍາໃຊ້ໄດ້ຕະຫຼອດໄລຍະການເຄື່ອນໄຫວຂອງທະນາຄານທຸລະກິດ ຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຕ້ອງນໍາໃຊ້ໃຫ້ຖືກຕ້ອງ, ບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນໍາໃຊ້.

**ມາດຕາ 16. ການຮັກສາຂໍ້ມູນ ກ່ຽວກັບການອະນຸຍາດສ້າງຕັ້ງ**

ທະນາຄານແຫ່ງ ສປປ ລາວ ຕ້ອງຮັກສາຂໍ້ມູນທັງໝົດ ກ່ຽວກັບການອະນຸຍາດສ້າງຕັ້ງທະນາຄານທຸລະກິດ ແຕ່ຕ້ອງບັນທຶກຂໍ້ມູນຕົ້ນຕໍ ຊຶ່ງມວນຊົນສາມາດກວດສອບໄດ້ ດັ່ງນີ້:

1. ຊື່, ທີ່ຕັ້ງຂອງສໍານັກງານໃຫຍ່ ແລະ ສາຂາ;
2. ທຶນຈົດທະບຽນ;
3. ເລກທີ ແລະ ວັນທີຂອງໃບອະນຸຍາດສ້າງຕັ້ງ;
4. ຂອບເຂດການເຄື່ອນໄຫວຂອງທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ.

ໃນກໍລະນີທີ່ທະນາຄານທຸລະກິດນັ້ນ ຫາກຖືກຖອນໃບອະນຸຍາດສ້າງຕັ້ງແລ້ວ ທະນາຄານແຫ່ງ ສປປ ລາວ ຕ້ອງລຶບຂໍ້ມູນດັ່ງກ່າວອອກ.

## ໝວດທີ II
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 17. ຮູບການຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ສ້າງຕັ້ງ ແລະເຄື່ອນໄຫວພາຍໃຕ້ຮູບການບໍລິສັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ຫ້າມສ້າງຕັ້ງທະນາຄານທຸລະກິດໃນຮູບແບບບໍລິສັດຈໍາກັດຜູ້ດຽວ.

**ມາດຕາ 18. ໂຄງປະກອບຂອງທະນາຄານທຸລະກິດ**

ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງທະນາຄານທຸລະກິດ ມີດັ່ງນີ້:

- ກອງປະຊຸມຜູ້ຖືຮຸ້ນ;
- ສະພາບໍລິຫານ;
- ຄະນະກໍາມະການຂອງສະພາບໍລິຫານ;
- ຜູ້ອໍານວຍການໃຫຍ່;
- ຜູ້ອໍານວຍການດ້ານການເງິນ;
- ຜູ້ຈັດການ.

ທະນາຄານທຸລະກິດ ມີສໍານັກງານໃຫຍ່, ອາດຈະມີສາຂາ, ໜ່ວຍບໍລິການ ແລະຫ້ອງການຜູ້ຕາງໜ້າຢູ່ພາຍໃນ ແລະຕ່າງປະເທດ.

**ມາດຕາ 19. ກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງທະນາຄານທຸລະກິດ. ກອງປະຊຸມຜູ້ຖືຮຸ້ນ ມີສອງປະເພດ ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ການແຈ້ງກ່ຽວກັບກອງປະຊຸມ, ອົງປະຊຸມ, ວາລະກອງປະຊຸມ, ວິທີລົງມະຕິ, ມະຕິກອງປະຊຸມ, ການປ່ຽນແປງ ແລະການລົບລ້າງມະຕິກອງປະຊຸມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ.

ກອງປະຊຸມສາມັນຂອງຜູ້ຖືຮຸ້ນ ຕ້ອງໄດ້ເປີດຂຶ້ນພາຍໃນກໍານົດສີ່ເດືອນ ຫຼັງຈາກສິ້ນສຸດປີການບັນຊີ. ໃນກໍລະນີທີ່ສະພາບໍລິຫານບໍ່ມີການຮຽກປະຊຸມ ໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮຽກກອງປະຊຸມຜູ້ຖືຮຸ້ນ ຕາມການສະເໜີຂອງຜູ້ຖືຮຸ້ນ. ຖ້າຫາກບໍ່ມີຜູ້ຖືຮຸ້ນສະເໜີ ກໍໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮຽກໂຮມກອງປະຊຸມດັ່ງກ່າວ ແລະກອງປະຊຸມນັ້ນ ຈະເລືອກຕັ້ງປະທານ ເພື່ອດໍາເນີນກອງປະຊຸມ.

**ມາດຕາ 20. ສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນຂອງຜູ້ຖືຮຸ້ນ**

ກອງປະຊຸມສາມັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາການປ່ຽນແປງກົດລະບຽບຂອງທະນາຄານທຸລະກິດ ຕາມການສະເໜີຂອງສະພາບໍລິຫານ;

2. ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານ, ຮອງປະທານ ແລະສະມາຊິກສະພາບໍລິຫານ;
3. ຕົກລົງເບ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບຳເນັດ ແລະນະໂຍບາຍຕ່າງໆ ສຳລັບຜູ້ບໍລິຫານ;
4. ຮັບຮອງເອົາບົດສະຫຼຸບ, ແຜນການດຳເນີນທຸລະກິດ ແລະບົດລາຍງານຜົນການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;
5. ຮັບຮອງເອົາການຄວບທຸລະກິດ, ການຂາຍຊັບສິນບັດສ່ວນໃຫຍ່ ຫຼື ການຍຸບເລີກທະນາຄານທຸລະກິດ ຕາມການສະເໜີຂອງສະພາບໍລິຫານ;
6. ຮັບຮອງເອົາການແບ່ງປັນເງິນປັນຜົນ, ການສ້າງຄັງຕ່າງໆ ຕາມການສະເໜີຂອງສະພາບໍລິຫານ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ກອງປະຊຸມວິສາມັນ ປະຕິບັດສິດ ແລະໜ້າທີ່ ທີ່ຈຳເປັນ ຊຶ່ງເກີດຂຶ້ນໃນລະຫວ່າງສອງກອງປະຊຸມສາມັນ ເປັນຕົ້ນ ການປັ່ງແປງກົດລະບຽບ, ການເພີ່ມ ຫຼື ຫຼຸດ ທຶນລົງ.

## ມາດຕາ 21. ສະພາບໍລິຫານ

ສະພາບໍລິຫານຂອງທະນາຄານທຸລະກິດ ປະກອບດ້ວຍສະມາຊິກແຕ່ ຫ້າ ຫາ ເຈັດຄົນ, ໃນນັ້ນອາດຈະມີສະມາຊິກຈາກພາຍນອກ.

ສະພາບໍລິຫານ ປະກອບດ້ວຍ ປະທານ, ຮອງປະທານ ແລະ ສະມາຊິກຈຳນວນໜຶ່ງ ຊຶ່ງຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຜູ້ຖືຮຸ້ນ. ອາຍຸການຂອງສະມາຊິກສະພາບໍລິຫານ ແມ່ນບໍ່ເກີນສອງປີ ແລະ ສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ສະພາບໍລິຫານ ຕ້ອງເປີດກອງປະຊຸມຢ່າງໜ້ອຍສາມເດືອນຕໍ່ຄັ້ງ. ການເຄື່ອນໄຫວຂອງສະພາບໍລິຫານ ໃຫ້ປະຕິບັດຕາມກົດລະບຽບຂອງທະນາຄານທຸລະກິດ ແລະລະບຽບກົດໝາຍ ທີ່ກ່ຽວຂ້ອງ.

## ມາດຕາ 22. ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ;
2. ລາຍງານການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ກອງປະຊຸມຜູ້ຖືຮຸ້ນ;
3. ຊີ້ແຈງ, ຕອບຄຳຖາມ ແລະໃຫ້ລາຍລະອຽດກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ກອງປະຊຸມຜູ້ຖືຮຸ້ນ;
4. ຮັບຜິດຊອບຕໍ່ຜົນເສຍຫາຍຂອງທະນາຄານທຸລະກິດຊຶ່ງເກີດຈາກຄວາມຜິດພາດຂອງຕົນ;
5. ສະເໜີແບ່ງປັນເງິນກຳໄລເຂົ້າຄັງຕ່າງໆ ແລະ ເງິນປັນຜົນ ຕໍ່ກອງປະຊຸມຜູ້ຖືຮຸ້ນ;
6. ສະເໜີແຜນດຳເນີນທຸລະກິດຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາຮັບຮອງ;
7. ແຕ່ງຕັ້ງຄະນະກຳມະການຄຸ້ມຄອງບໍລິຫານ, ຄະນະກຳມະການກວດສອບບັນຊີ ພາຍໃນ

ແລະ ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຂອງສະພາບໍລິຫານ;

8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການດ້ານການເງິນ;

9. ຮັບຮອງເອົາການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ ຕາມການສະເໜີຂອງຜູ້ອຳນວຍການໃຫຍ່;

10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງທະນາຄານທຸລະກິດ.

ສະມາຊິກສະພາບໍລິຫານ ບໍ່ສາມາດມອບໜ້າທີ່ຂອງຕົນ ໃຫ້ຜູ້ອື່ນປະຕິບັດແທນໄດ້.

## ມາດຕາ 23. ເງື່ອນໄຂຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານທະນາຄານທຸລະກິດ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄວາມສາມາດທາງດ້ານການປະພຶດ;
2. ມີປະສົບການທາງດ້ານບໍລິຫານຈັດການ ແລະມີຄວາມຮູ້ຄວາມສາມາດ ທາງດ້ານການເງິນ-ການທະນາຄານ;
3. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;
4. ບໍ່ເຄີຍຖືກປົດອອກຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
5. ຕ້ອງພົ້ນຈາກໜ້າທີ່ ຢ່າງໜ້ອຍໜຶ່ງປີ ກ່ອນການຖືກແຕ່ງຕັ້ງເປັນສະມາຊິກສະພາບໍລິຫານ ຖ້າຫາກແມ່ນພະນັກງານຂອງທະນາຄານແຫ່ງ ສປປ ລາວ.

## ມາດຕາ 24. ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ປະກອບມີ ຄະນະກຳມະການຄຸ້ມຄອງບໍລິຫານ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະຄະນະກຳມະການກວດສອບບັນຊີພາຍໃນ. ໃນກໍລະນີທີ່ມີຄວາມຈຳເປັນ ອາດຈະສ້າງຕັ້ງຄະນະກຳມະການອື່ນໆຂຶ້ນກໍໄດ້ ຕາມການຕົກລົງຂອງສະພາບໍລິຫານ.

ແຕ່ລະຄະນະກຳມະການ ປະກອບດ້ວຍ ສະມາຊິກສະພາບໍລິຫານສາມຄົນ ໃນນັ້ນມີຜູ້ໜຶ່ງເປັນປະທານຄະນະກຳມະການ. ຖ້າມີສະມາຊິກສະພາບໍລິຫານຈາກພາຍນອກ ໃນຄະນະກຳມະການໃດ ກໍໃຫ້ສະມາຊິກຜູ້ນັ້ນເປັນປະທານຄະນະກຳມະການ. ສະມາຊິກສະພາບໍລິຫານຜູ້ໜຶ່ງ ສາມາດສັງກັດຢູ່ຫຼາຍຄະນະກຳມະການ ແລະສາມາດເປັນປະທານໄດ້ແຕ່ພຽງໜຶ່ງ ຄະນະກຳມະການເທົ່ານັ້ນ.

**ມາດຕາ 25. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງບໍລິຫານ**

ຄະນະກຳມະການຄຸ້ມຄອງບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄັດເລືອກເປົ້າໝາຍທີ່ຈະເປັນສະມາຊິກສະພາບໍລິຫານ ຕາມມາດຕະຖານເງື່ອນໄຂ ທີ່ໄດ້ກຳນົດໄວ້ ເພື່ອສະເໜີໃຫ້ກອງປະຊຸມຂອງຜູ້ຖືຮຸ້ນ ເລືອກຕັ້ງ;
2. ຄັດເລືອກເປົ້າໝາຍທີ່ຈະເປັນຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການດ້ານການເງິນ ຕາມມາດຕະຖານເງື່ອນໄຂທີ່ໄດ້ກຳນົດໄວ້ ເພື່ອສະເໜີໃຫ້ສະພາບໍລິຫານ ແຕ່ງຕັ້ງ;
3. ຄົ້ນຄວ້າແຜນການດຳເນີນງານຂອງສະພາບໍລິຫານໃນແຕ່ລະປີ;
4. ກຳນົດເງື່ອນໄຂ ແລະແຜນການ ເພື່ອຕີລາຄາການເຄື່ອນໄຫວຂອງສະພາບໍລິຫານ ແລະ ຜູ້ບໍລິຫານ;
5. ຈັດກອງປະຊຸມຢ່າງໜ້ອຍ ຫົກເດືອນຕໍ່ຄັ້ງ ຫຼື ເປີດກອງປະຊຸມ ຕາມການຮຽກປະຊຸມ ຂອງສະພາບໍລິຫານ;
6. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;
7. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ**

ເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຄວາມສ່ຽງ ທີ່ອາດຈະເກີດຂຶ້ນແກ່ທະນາຄານທຸລະກິດນັ້ນ ຄະນະກຳມະການຄຸ້ມຄອງຄວາມສ່ຽງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດນະໂຍບາຍ ແລະ ຂັ້ນຕອນໃນການຄຸ້ມຄອງຄວາມສ່ຽງທາງດ້ານສິນເຊື່ອ, ຕະຫຼາດ, ປະເທດ, ການດຳເນີນງານ ແລະຄວາມສ່ຽງອື່ນໆ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ສະພາບໍລິຫານຊາບ;
2. ຕິດຕາມ ກວດກາ ແລະລາຍງານໃຫ້ສະພາບໍລິຫານຊາບກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ລະບຽບການສິນເຊື່ອ ແລະຄວາມສ່ຽງຕ່າງໆ;
3. ປະກອບຄຳເຫັນຕໍ່ບັນຫາ ທີ່ສະພາບໍລິຫານມອບໝາຍໃຫ້ ຫຼື ຕ້ອງການໃຫ້ແກ້ໄຂ;
4. ຈັດກອງປະຊຸມຢ່າງໜ້ອຍໜຶ່ງເດືອນຕໍ່ຄັ້ງ ຫຼື ເປີດກອງປະຊຸມຕາມການຮຽກໂຮມ ຂອງສະພາບໍລິຫານ;
5. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 27. ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດສອບບັນຊີພາຍໃນ**

ຄະນະກຳມະການກວດສອບບັນຊີພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ວາງລະບອບບັນຊີທີ່ເໝາະສົມ ແລະລະບົບການກວດກາບັນຊີ ສຳລັບທະນາຄານທຸລະກິດ ໂດຍສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;
2. ສ້າງແຜນການ ແລະງົບປະມານ ສຳລັບການກວດສອບບັນຊີພາຍໃນຂອງທະນາຄານທຸລະກິດ;
3. ຕິດຕາມການຈັດຕັ້ງປະຕິບັດວຽກງານການບັນຊີ ຕາມຂັ້ນຕອນທີ່ກຳນົດໄວ້. ຖ້າເຫັນວ່າມີຄວາມຈຳເປັນ ກໍໃຫ້ມີການກວດສອບຈາກພາຍນອກໄດ້;
4. ຕີລາຄາຄຸນນະພາບຂອງບໍລິສັດກວດສອບບັນຊີພາຍນອກ, ຄວາມເປັນເອກະລາດ ແລະການພົວພັນຂອງຜູ້ກວດສອບພາຍນອກ ໂດຍເບິ່ງສາຍພົວພັນຮອບດ້ານລະຫວ່າງຜູ້ກວດສອບພາຍນອກກັບທະນາຄານທຸລະກິດ;
5. ວ່າຈ້າງ, ກຳນົດຂອບເຂດຂອງການກວດສອບ ຫຼື ຍົກເລີກສັນຍາກັບຜູ້ກວດສອບບັນຊີພາຍນອກ ຕາມການຕົກລົງຂອງສະພາບໍລິຫານ;
6. ປຶກສາຫາລື ກ່ຽວກັບບົດລາຍງານການເງິນປະຈຳປີ ແລະ ປະຈຳໄຕມາດ ທີ່ຖືກກວດສອບນັ້ນ ກັບຜູ້ບໍລິຫານທີ່ກ່ຽວຂ້ອງ ແລະ ຜູ້ກວດສອບບັນຊີພາຍນອກ;
7. ຕິດຕາມ ກວດກາຄວາມຄືບໜ້າຂອງຜູ້ບໍລິຫານ ກ່ຽວກັບການແກ້ໄຂຂໍ້ຄົງຄ້າງ ທີ່ກຳນົດໄວ້ຢູ່ໃນບົດລາຍງານການກວດສອບ;
8. ຂໍຄຳປຶກສາ ແລະ ການຊ່ວຍເຫຼືອ ຈາກທີ່ປຶກສາທາງດ້ານກົດໝາຍ, ທີ່ປຶກສາດ້ານບັນຊີ ແລະ ອື່ນໆ ຕາມທີ່ຕົນເຫັນວ່າມີຄວາມຈຳເປັນ;
9. ປະກອບຄວາມເຫັນຕໍ່ບັນຫາທີ່ສະພາບໍລິຫານ ຫຼື ຜູ້ບໍລິຫານ ໄດ້ສະເໜີຂຶ້ນ;
10. ລາຍງານການຕົກລົງບັນຫາ ຕາມຂໍ້ 1, 2 ແລະ 3 ຫຼື ບັນຫາອື່ນໆ ທີ່ເຫັນວ່າມີຄວາມຈຳເປັນໃຫ້ແກ່ສະພາບໍລິຫານ;
11. ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;
12. ເປີດກອງປະຊຸມຢ່າງໜ້ອຍ ສອງເດືອນຕໍ່ຄັ້ງ ຫຼື ເປີດກອງປະຊຸມ ຕາມການຕົກລົງຂອງສະພາບໍລິຫານ;
13. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 28. ຜູ້ອຳນວຍການໃຫຍ່**

ຜູ້ອຳນວຍການໃຫຍ່ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນ ໃນຂອບເຂດສິດ ແລະໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງທະນາຄານທຸລະກິດ.

ຜູ້ອໍານວຍການໃຫຍ່ ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງໂດຍສະພາບໍລິຫານ, ມີອາຍຸການສອງປີ ແລະສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຜູ້ອໍານວຍການໃຫຍ່ ສາມາດເປັນສະມາຊິກສະພາບໍລິຫານໄດ້ ແຕ່ບໍ່ໃຫ້ດໍາລົງຕໍາແໜ່ງເປັນປະທານ ຫຼື ຮອງປະທານສະພາບໍລິຫານ.

**ມາດຕາ 29. ສິດ ແລະ ໜ້າທີ່ ຂອງຜູ້ອໍານວຍການໃຫຍ່**

ຜູ້ອໍານວຍການໃຫຍ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຕົວແທນໃນການລົງລາຍເຊັນໃນສັນຍາ ແລະເອກະສານທາງການຂອງທະນາຄານທຸລະກິດ;
2. ບໍລິຫານວຽກງານປະຈໍາວັນຂອງທະນາຄານທຸລະກິດ ໃນຂອບເຂດສິດ ແລະໜ້າທີ່ຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບ ຫຼື ຕາມການມອບໝາຍຂອງສະພາບໍລິຫານ;
3. ສ້າງ, ສະເໜີ ຫຼື ດັດແກ້ແຜນທຸລະກິດປະຈໍາປີ ເພື່ອໃຫ້ສະພາບໍລິຫານພິຈາລະນາຮັບຮອງເອົາ ແລ້ວນໍາໄປຈັດຕັ້ງປະຕິບັດ;
4. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຮອງຜູ້ອໍານວຍການໃຫຍ່ ແລ້ວສະເໜີໃຫ້ສະພາບໍລິຫານ ຮັບຮອງເອົາ;
5. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຜູ້ຈັດການ ແລະບັນຈຸສັບຊ້ອນພະນັກງານຂອງທະນາຄານທຸລະກິດ;
6. ສະໜອງຂໍ້ມູນ ແລະ ໃຫ້ຄໍາຊີ້ແຈງກ່ຽວກັບບັນຫາ ທີ່ສະພາບໍລິຫານມີຄວາມສົນໃຈ;
7. ສ້າງ ຫຼື ປັບປຸງກົດລະບຽບການຄຸ້ມຄອງ ເພື່ອສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;
8. ຮັບຜິດຊອບທຸກການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ສະພາບໍລິຫານ;
9. ສະເໜີເປີດສາຂາ, ສ້າງຕັ້ງບໍລິສັດໃນກຸ່ມ ຫຼື ລົງທຶນໃນທຸລະກິດອື່ນ ຕໍ່ສະພາບໍລິຫານພິຈາລະນາຕົກລົງ;
10. ຕົກລົງກ່ຽວກັບເງິນເດືອນຂອງພະນັກງານ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ປະຕິບັດ ວິໄນຕໍ່ພະນັກງານ ຕາມກົດລະບຽບຂອງທະນາຄານທຸລະກິດ;
11. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະຊີ້ແຈງບັນຫາ ຕໍ່ຄະນະກໍາມະການກວດສອບບັນຊີພາຍໃນ ແລະ ຜູ້ກວດສອບພາຍນອກ;
12. ລາຍງານການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ສະພາບໍລິຫານ ແລະຄະນະກໍາມະການຕ່າງໆຂອງສະພາບໍລິຫານ, ໃຫ້ຄໍາຊີ້ແຈງ ແລະສະໜອງເອກະສານທີ່ຈໍາເປັນຕາມຄວາມຕ້ອງການຂອງພາກສ່ວນດັ່ງກ່າວ;
13. ປະຕິບັດ ສິດ ແລະໜ້າທີ່ອື່ນໆ ຕາມກົດລະບຽບໄດ້ກໍານົດໄວ້.

**ມາດຕາ 30. ຜູ້ອຳນວຍການດ້ານການເງິນ ແລະຜູ້ຈັດການ**

ຜູ້ອຳນວຍການດ້ານການເງິນ ເປັນຜູ້ບໍລິຫານຈັດການວຽກງານການເງິນ, ການບັນຊີຂອງທະນາຄານທຸລະກິດ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາບໍລິຫານ, ມີອາຍຸການ ສອງປີ ແລະສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ສິດ ແລະໜ້າທີ່ລະອຽດ ຂອງຜູ້ອຳນວຍການດ້ານການເງິນ ແລະ ຜູ້ຈັດການ ໄດ້ກຳນົດໄວ້ໃນລະບຽບການຄຸ້ມຄອງຂອງທະນາຄານທຸລະກິດ.

**ມາດຕາ 31. ການສ້າງຕັ້ງບໍລິສັດໃນກຸ່ມ, ສາຂາ, ໜ່ວຍບໍລິການ ແລະ ຫ້ອງການຜູ້ຕາງໜ້າ**

ທະນາຄານທຸລະກິດ ສາມາດສ້າງຕັ້ງບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າຢູ່ພາຍໃນ ຫຼື ຕ່າງປະເທດ ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ.

ສຳລັບ ໜ່ວຍບໍລິການນັ້ນ ແມ່ນທະນາຄານທຸລະກິດ ເປັນຜູ້ພິຈາລະນາສ້າງຕັ້ງ.

**ມາດຕາ 32. ເງື່ອນໄຂການສ້າງຕັ້ງ ບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າ**

ທະນາຄານທຸລະກິດ ທີ່ມີຈຸດປະສົງຢາກສ້າງຕັ້ງບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ກົງຈັກການຄຸ້ມຄອງບໍລິຫານທຸລະກິດ, ລະບົບກວດສອບບັນຊີພາຍໃນ ມີປະສິດທິພາບ;
2. ລະບົບຮັບ-ສົ່ງ ຂໍ້ມູນຂ່າວສານ ສາມາດຕອບສະໜອງໃຫ້ແກ່ວຽກງານຄຸ້ມຄອງ ມີປະສິດທິພາບ;
3. ປະຕິບັດກົດລະບຽບກ່ຽວກັບການຮັກສາຄວາມໝັ້ນຄົງ ຂອງທະນາຄານທຸລະກິດໄດ້ດີ.

ສຳລັບເງື່ອນໄຂການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຂອງທະນາຄານທຸລະກິດຕ່າງປະເທດນັ້ນ ໃຫ້ປະຕິບັດຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ແລະກົດໝາຍວ່າດ້ວຍ ການສົ່ງເສີມ ແລະການຄຸ້ມຄອງການລົງທຶນຕ່າງປະເທດ ຢູ່ ສປປ ລາວ.

ເງື່ອນໄຂລະອຽດກ່ຽວກັບການສ້າງຕັ້ງ, ການປະກອບສຳນວນຄຳຮ້ອງຂໍສ້າງຕັ້ງບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ III
## ການເຄື່ອນໄຫວຂອງທະນາຄານທຸລະກິດ

### ໝວດທີ I
### ເງື່ອນໄຂ ແລະລະບຽບການດຳເນີນທຸລະກິດ

**ມາດຕາ 33. ເງື່ອນໄຂລວມດ້ານຄວາມໝັ້ນຄົງ**

ເພື່ອຮັບປະກັນຄວາມໝັ້ນຄົງໃນການດຳເນີນທຸລະກິດຂອງຕົນ ທະນາຄານທຸລະກິດ ຕ້ອງປະຕິບັດເງື່ອນໄຂລວມ ດັ່ງນີ້:

1. ຕ້ອງດຳເນີນທຸລະກິດ ຕາມລະບົບການບໍລິຫານ ແລະການບັນຊີທີ່ດີ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;
2. ຕ້ອງຮັກສາທຶນໃຫ້ພຽງພໍ, ຮັບປະກັນສະພາບຄ່ອງ ແລະຮັບປະກັນການຄຸ້ມຄອງຊັບສິນໃຫ້ມີຄວາມຕໍ່ເນື່ອງ ແລະກະຈາຍຄວາມສ່ຽງ;
3. ຕ້ອງມີລະບຽບ, ກົນໄກ ແລະຂັ້ນຕອນທີ່ຄົບຖ້ວນ ເພື່ອຈຳແນກປະເພດລູກຄ້າທີ່ມີໃນປັດຈຸບັນ, ລູກຄ້າທີ່ຈະມີໃນອະນາຄົດ ແລະທຸລະກຳຕ່າງໆຂອງລູກຄ້າ.

**ມາດຕາ 34. ລະບຽບການຄຸ້ມຄອງບໍລິຫານພາຍໃນ**

ທະນາຄານທຸລະກິດ ຕ້ອງມີລະບຽບການຄຸ້ມຄອງບໍລິຫານພາຍໃນ ຊຶ່ງເນື້ອໃນຕົ້ນຕໍ ກຳນົດກ່ຽວກັບໂຄງປະກອບການຈັດຕັ້ງ ແລະກົນໄກການຄຸ້ມຄອງບໍລິຫານ ຊຶ່ງໃນນັ້ນ ລວມເອົາທີ່ຕັ້ງ, ພາລະບົດບາດ, ສິດ ແລະໜ້າທີ່ຄວາມຮັບຜິດຊອບ, ການຕິດຕາມ ກວດກາ ແລະການລາຍງານຂອງຜູ້ບໍລິຫານ, ໜ່ວຍງານ ແລະພະນັກງານຂອງທະນາຄານທຸລະກິດ.

ທະນາຄານທຸລະກິດ ຕ້ອງສົ່ງສຳເນົາເອກະສານ ກ່ຽວກັບລະບຽບການຄຸ້ມຄອງ ແລະບັນຊີພະນັກງານຂອງຕົນ ທີ່ມີສິດລົງລາຍເຊັນ ພ້ອມທັງສຳເນົາລາຍເຊັນດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ ຊາບ. ຖ້າມີການປັບປຸງເອກະສານເຫຼົ່ານັ້ນ ກໍຕ້ອງແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ພາຍໃນກຳນົດຫ້າວັນລັດຖະການ.

**ມາດຕາ 35. ການຮັກສາຄວາມລັບ**

ຜູ້ບໍລິຫານ, ພະນັກງານ ແລະຜູ້ຖືກມອບໝາຍ ທີ່ພວມປະຕິບັດ ຫຼື ພົ້ນຈາກໜ້າທີ່ຂອງທະນາຄານທຸລະກິດໄປແລ້ວ ຕ້ອງຮັກສາຂໍ້ມູນທີ່ເປັນຄວາມລັບຂອງທະນາຄານທຸລະກິດນັ້ນ. ຫ້າມເປີດເຜີຍ ຫຼື ນຳໃຊ້ຂໍ້ມູນເຫຼົ່ານັ້ນ ເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຜູ້ອື່ນ ເວັ້ນເສຍແຕ່ເພື່ອຜົນປະໂຫຍດຂອງທະນາຄານທຸລະກິດດັ່ງກ່າວ. ຂໍ້ມູນທີ່ເປັນຄວາມລັບ ສາມາດເປີດເຜີຍໃຫ້ທະນາຄານແຫ່ງ ສປປ ລາວ, ຜູ້ກວດສອບ ຫຼື ອົງການທີ່ມີສິດອຳນາດ ໄດ້ຕາມລະບຽບກົດໝາຍ.

**ມາດຕາ 36. ການຕ້ານ ແລະ ສະກັດກັ້ນການຟອກເງິນ**

ທະນາຄານທຸລະກິດ ຕ້ອງວາງມາດຕະການເພື່ອຕ້ານ ແລະສະກັດກັ້ນການຟອກເງິນ ຕາມກົນໄກ ແລະ ລະບຽບກົດໝາຍໄດ້ກຳນົດໄວ້.

**ມາດຕາ 37. ການເປີດເຜີຍຜົນປະໂຫຍດ**

ຜູ້ບໍລິຫານຂອງທະນາຄານທຸລະກິດ ຕ້ອງແຈ້ງກິດຈະການທີ່ຕົນ ຫຼື ບຸກຄົນທີ່ກ່ຽວຂ້ອງກັບຕົນ ມີຜົນປະໂຫຍດຕິດພັນກັບທະນາຄານທຸລະກິດ ໃຫ້ແກ່ສະພາບໍລິຫານຂອງທະນາຄານທຸລະກິດຂອງຕົນຊາບຢ່າງລະອຽດ.

ໃນເວລາມີການພິຈາລະນາກິດຈະການທີ່ຕົນ ຫຼື ບຸກຄົນທີ່ກ່ຽວຂ້ອງກັບຕົນ ມີຜົນປະໂຫຍດຕິດພັນນັ້ນ ຜູ້ບໍລິຫານດັ່ງກ່າວ ຕ້ອງຖອນຕົວອອກຈາກກອງປະຊຸມ.

ໃນກໍລະນີທີ່ຜູ້ບໍລິຫານ ຫາກບໍ່ປະຕິບັດຕາມຂໍ້ກຳນົດຂ້າງເທິງນີ້ ທະນາຄານທຸລະກິດ ຫຼື ຜູ້ຖືຮຸ້ນ ມີສິດຮ້ອງຟ້ອງຕໍ່ສານ ເພື່ອລົບລ້າງສັນຍາ ທີ່ຕິດພັນກັບກິດຈະການດັ່ງກ່າວ. ພ້ອມກັນນັ້ນ ທະນາຄານແຫ່ງ ສປປ ລາວ ຈະໂຈະການປະຕິບັດໜ້າທີ່ຂອງຜູ້ບໍລິຫານນີ້ ແລະຈະຖືກປົດຕຳແໜ່ງ ພາຍຫຼັງທີ່ສານໄດ້ຕັດສິນຍົກເລີກສັນຍາ.

**ມາດຕາ 38. ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ພະນັກງານ**

ຜູ້ບໍລິຫານ ແລະພະນັກງານ ຂອງທະນາຄານທຸລະກິດ ຕ້ອງມີຄວາມຮັບຜິດຊອບສູງໃນການປະຕິບັດໜ້າທີ່ຂອງຕົນ ໂດຍຖືເອົາຜົນປະໂຫຍດຂອງລູກຄ້າ ແລະທະນາຄານທຸລະກິດ ສູງກວ່າຜົນປະໂຫຍດຂອງຕົນເອງ.

ທະນາຄານທຸລະກິດ ຕ້ອງປະຕິບັດມາດຕະການ ທີ່ເໝາະສົມຕໍ່ຜູ້ບໍລິຫານ ຫຼື ພະນັກງານຂອງຕົນທີ່ໄດ້ສ້າງຜົນເສັຍຫາຍໃຫ້ແກ່ທະນາຄານທຸລະກິດ ຫຼື ລູກຄ້າ.

**ມາດຕາ 39. ກຳນົດເວລາຂອງການໃຫ້ບໍລິການ**

ທະນາຄານທຸລະກິດ ຕ້ອງແຈ້ງກຳນົດເວລາການໃຫ້ບໍລິການໃຫ້ລູກຄ້າຊາບ ແລະບໍ່ສາມາດຢຸດການໃຫ້ບໍລິການໃນກຳນົດເວລາດັ່ງກ່າວ, ຖ້າຈະຢຸດ ກໍຕ້ອງປະກາດໃຫ້ລູກຄ້າຊາບກ່ອນ ຊາວສີ່ຊົ່ວໂມງ.

## ໝວດທີ II
## ກິດຈະການຂອງທະນາຄານທຸລະກິດ

**ມາດຕາ 40. ປະເພດກິດຈະການຂອງທະນາຄານທຸລະກິດ**

ກິດຈະການຂອງທະນາຄານທຸລະກິດ ມີສອງປະເພດ ຄື:

1. ທຸລະກິດການທະນາຄານ;
2. ທຸລະກິດດ້ານການເງິນ.

**ມາດຕາ 41. ທຸລະກິດການທະນາຄານ**

ທຸລະກິດການທະນາຄານ ປະກອບດ້ວຍ:

1. ຮັບເງິນຝາກປະເພດຕ່າງໆເຊັ່ນ: ເງິນຝາກກະແສລາຍວັນ, ເງິນຝາກປະຢັດ, ເງິນຝາກມີກຳນົດສາມເດືອນ, ຫົກເດືອນ, ໜຶ່ງປີ ແລະເກີນໜຶ່ງປີ ໂດຍມີດອກເບ້ຍ ຫຼື ບໍ່ມີດອກເບ້ຍ;
2. ສະໜອງສິນເຊື່ອດ້ວຍຮູບການໃຫ້ກູ້ຢືມໄລຍະສັ້ນ, ໄລຍະກາງ ແລະໄລຍະຍາວ; ການຊື້ຫຼຸດ ແລະຮັບຊ່ວງຊື້ຫຼຸດເອກະສານມີຄ່າ; ການຄ້ຳປະກັນ. ນອກຈາກນີ້ ການສະໜອງສິນເຊື່ອໃນຮູບການອື່ນ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
3. ໃຫ້ບໍລິການຊຳລະ ແລະຮຽກເກັບ;
4. ອອກ ແລະຄຸ້ມຄອງເຄື່ອງມືຊຳລະ ເຊັ່ນ: ແຊັກ, ບັດຊຳລະປະເພດຕ່າງໆ;
5. ຊື້-ຂາຍເງິນຕາຕ່າງປະເທດ;
6. ໃຫ້ບໍລິການເກັບຮັກສາຄວາມປອດໄພເອກະສານ ແລະວັດຖຸມີຄ່າ.

**ມາດຕາ 42. ທຸລະກິດດ້ານການເງິນ**

ໃນການດຳເນີນທຸລະກິດດ້ານການເງິນ ທະນາຄານທຸລະກິດ ສາມາດດຳເນີນ ໄດ້ດັ່ງນີ້:

1. ອອກ ແລະ ຊື້-ຂາຍ ຫຼັກຊັບ;
2. ເປັນຕົວແທນທາງດ້ານການເງິນ;
3. ເຮັດທຸລະກິດປະກັນໄພ;
4. ເຮັດທຸລະກິດໃຫ້ເຊົ່າ;
5. ບໍລິການໃຫ້ຄຳປຶກສາດ້ານການເງິນ;
6. ບໍລິການປຶກສາກ່ຽວກັບການລົງທຶນ ແລະ ໝູນທຶນ;
7. ໃຫ້ການຄ້ຳປະກັນການຈຳໜ່າຍ ແລະ ຊື້-ຂາຍ ຫຼັກຊັບ;
8. ດຳເນີນທຸລະກິດທາງດ້ານການເງິນອື່ນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 43. ຂໍ້ຫ້າມໃນການດຳເນີນທຸລະກິດ**

ຫ້າມທະນາຄານທຸລະກິດ ດຳເນີນທຸລະກຳ ດັ່ງນີ້:

1. ດຳເນີນ ຫຼື ຮ່ວມດຳເນີນທຸລະກຳໃດໜຶ່ງ ຊຶ່ງຈະເຮັດໃຫ້ຕົນ ຫຼື ຜູ້ອື່ນ ມີຖານະເປັນຜູ້ຄວບຄຸມຕະຫຼາດເງິນຕາ, ຕະຫຼາດທຶນ ຫຼື ຕະຫຼາດເງິນຕາຕ່າງປະເທດ;
2. ດຳເນີນທຸລະກຳທີ່ເປັນການປັ່ນປ່ວນ ເຮັດໃຫ້ເກີດມີການໄດ້ປຽບ ຫຼື ເສຍປຽບ ແບບບໍ່ຍຸຕິທຳ ລະຫວ່າງທະນາຄານທຸລະກິດດ້ວຍກັນ ແລະ ພາກສ່ວນອື່ນ;
3. ຮຽກຮ້ອງ ຫຼື ກຳນົດເງື່ອນໄຂທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ໃຫ້ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງປະຕິບັດ ກ່ອນຈະໄດ້ຮັບການບໍລິການຂອງຕົນ ຫຼື ໃນກຸ່ມ;

4. ຊື້ຊັບສິນຂອງບໍລິສັດໃນກຸ່ມ, ຊື້ຫຼັກຊັບທີ່ບໍລິສັດໃນກຸ່ມຂອງຕົນ ຊຶ່ງໃຫ້ການຄໍ້າປະກັນການຈໍາໜ່າຍ ໃນປີຜ່ານມາ;
5. ສະໜອງສິນເຊື່ອ ເພື່ອເອື້ອອໍານວຍຄວາມສະດວກໃນການຊື້ຫຼັກຊັບ ທີ່ຕົນ ຫຼື ບໍລິສັດໃນກຸ່ມ ໃຫ້ການຄໍ້າປະກັນການຈໍາໜ່າຍ.

**ມາດຕາ 44. ມາດຕະການຮັກສາຄວາມໝັ້ນຄົງ**

ເພື່ອຮັກສາຄວາມໝັ້ນຄົງ ທະນາຄານທຸລະກິດ ຕ້ອງປະຕິບັດມາດຕະການຕ່າງໆທີ່ທະນາຄານແຫ່ງ ສປປ ລາວ ໄດ້ກໍານົດອອກຢ່າງຖືກຕ້ອງ ດັ່ງນີ້:

1. ລະດັບອັດຕາສ່ວນຕ່າງໆ ທີ່ພົວພັນເຖິງຊັບສິນ, ຊັບສິນທີ່ມີຄວາມສ່ຽງ, ລາຍການນອກໃບສະຫຼຸບຊັບສິນບັດ, ທຶນ ແລະ ຄັງສໍາຮອງປະເພດຕ່າງໆ;
2. ອັດຕາສ່ວນສິນເຊື່ອສູງສຸດທີ່ທະນາຄານທຸລະກິດໄດ້ປ່ອຍ ຫຼື ສັນຍາຈະປ່ອຍ ເພື່ອຜົນປະໂຫຍດຂອງບຸກຄົນ, ກຸ່ມຄົນທີ່ມີສາຍພົວພັນກັນ ຫຼື ກຸ່ມບຸກຄົນທີ່ກ່ຽວຂ້ອງກັບທະນາຄານທຸລະກິດ ທຽບໃສ່ທຶນຕາມລະບຽບການ;
3. ອັດຕາສ່ວນສິນເຊື່ອສູງສຸດທີ່ໄດ້ປ່ອຍ ຫຼື ສັນຍາຈະປ່ອຍໃຫ້ລູກຄ້າລາຍໃຫຍ່ ທຽບໃສ່ຍອດລວມສິນເຊື່ອທັງໝົດ;
4. ຮັກສາສະພາບຄ່ອງຂັ້ນຕໍ່າສຸດ ທີ່ພົວພັນກັບມູນຄ່າ ຫຼືການປ່ຽນແປງມູນຄ່າຂອງຊັບສິນ, ການປ່ຽນແປງໜີ້ສິນ ແລະອັດຕາສ່ວນເງິນແຮຝາກພາກບັງຄັບ ໄວ້ຢູ່ທະນາຄານແຫ່ງ ສປປລາວ;
5. ຮັກສາອັດຕາສ່ວນສູງສຸດຂອງການລົງທຶນ ເຂົ້າໃສ່ຊັບສິນບັດຄົງທີ່ ຫຼື ການລົງທຶນໃດໜຶ່ງທຽບໃສ່ທຶນທັງໝົດຂອງທະນາຄານທຸລະກິດ;
6. ຕີລາຄາຊັບສິນ, ຈັດຊັ້ນຊັບສິນ, ຈັດຊັ້ນໜີ້ ແລະ ສໍາຮອງໜີ້ ໃຫ້ຄົບຖ້ວນ;
7. ປະຕິບັດຂໍ້ຫ້າມ, ຂໍ້ຈໍາກັດຕ່າງໆກ່ຽວກັບສິນເຊື່ອ, ການລົງທຶນ, ຄວາມສ່ຽງດ້ານຕະຫຼາດ, ການຮັກສາລະດັບຖານະເງິນຕາຕ່າງປະເທດ ແລະອື່ນໆ;
8. ບໍ່ແບ່ງປັນທຶນ ຖ້າຫາກເຫັນວ່າທຶນຕາມລະບຽບການຂອງທະນາຄານທຸລະກິດ ຕໍ່າກວ່າລະດັບທຶນ ທີ່ທະນາຄານແຫ່ງ ສປປ ລາວ ກໍານົດໄວ້;
9. ບໍ່ດໍາເນີນທຸລະກິດກ່ຽວກັບອຸດສາຫະກໍາ, ການຄ້າ ຫຼື ບໍລິການໃດໜຶ່ງໂດຍກົງ ຊຶ່ງບໍ່ແມ່ນທຸລະກິດການເງິນ-ການທະນາຄານ;
10. ບໍ່ປ່ອຍສິນເຊື່ອ ໂດຍຮັບເອົາຮຸ້ນຂອງທະນາຄານທຸລະກິດເອງ ເປັນຫຼັກຊັບຄໍ້າປະກັນເງິນກູ້;
11. ບໍ່ຊື້ຮຸ້ນທີ່ອອກດ້ວຍຕົນເອງ ຖ້າວ່າທຶນຂອງທະນາຄານທຸລະກິດດັ່ງກ່າວ ຕໍ່າກວ່າອັດຕາສ່ວນຄວາມພຽງພໍຂອງທຶນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກໍານົດໄວ້.

**ມາດຕາ 45. ການເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ**

ທະນາຄານທຸລະກິດ ຕ້ອງສ້າງລະບົບເກັບຮັກສາຂໍ້ມູນ ແລະເອກະສານ ຢູ່ທີ່ສຳນັກງານໃຫຍ່ຂອງຕົນ ຊຶ່ງປະກອບດ້ວຍ:

1. ກົດລະບຽບພາຍໃນ ແລະລະບຽບການອື່ນໆກ່ຽວກັບການຄຸ້ມຄອງບໍລິຫານ ລວມທັງການດັດແກ້ຕ່າງໆ;
2. ບັນຊີ ການຂຶ້ນທະບຽນກ່ຽວກັບຜູ້ຖືຮຸ້ນ;
3. ບົດບັນທຶກ ແລະມະຕິຕົກລົງ ຂອງກອງປະຊຸມສະພາບໍລິຫານ;
4. ບົດບັນທຶກ ແລະມະຕິຕົກລົງ ຂອງກອງປະຊຸມຜູ້ຖືຮຸ້ນ;
5. ບົດບັນທຶກການບັນຊີ ຊຶ່ງສະແດງໃຫ້ເຫັນຢ່າງຈະແຈ້ງ ແລະຖືກຕ້ອງ ກ່ຽວກັບສະພາບການດຳເນີນທຸລະກິດ, ການເຮັດທຸລະກຳ ແລະເງື່ອນໄຂທາງດ້ານການເງິນ;
6. ບົດບັນທຶກທຸລະກຳ, ເອກະສານສິນເຊື່ອ ແລະບັນຊີຂອງລູກຄ້າແຕ່ລະຄົນ;
7. ບົດບັນທຶກອື່ນໆ ທີ່ເຫັນວ່າຈຳເປັນຕາມກົດໝາຍສະບັບນີ້ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 46. ການແຈ້ງເນື້ອໃນ ແລະ ເງື່ອນໄຂຂອງທຸລະກຳ**

ທະນາຄານທຸລະກິດ ຕ້ອງແຈ້ງໃຫ້ລູກຄ້າຂອງຕົນຊາບຢ່າງເປັນປະຈຳ ກ່ຽວກັບເນື້ອໃນແລະ ເງື່ອນໄຂ ຊຶ່ງຕິດພັນກັບການຊື້-ຂາຍເງິນຕາຕ່າງປະເທດ, ເງິນຝາກ ແລະສິນເຊື່ອ ລວມທັງອັດຕາດອກເບ້ຍປະຈຳປີ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 47. ການດຳເນີນທຸລະກຳເພື່ອຜົນປະໂຫຍດຂອງຜູ້ກ່ຽວຂ້ອງ**

ທະນາຄານທຸລະກິດ ບໍ່ສາມາດເຮັດທຸລະກຳເພື່ອຜົນປະໂຫຍດຂອງຜູ້ກ່ຽວຂ້ອງໄດ້ ເປັນຕົ້ນແມ່ນການໃຫ້ສິນເຊື່ອ, ການຊື້ຊັບສິນທາງດ້ານການເງິນ, ການຊື້ສິນຄ້າ ແລະການບໍລິການ, ການລົງທຶນ ຢູ່ໃນທຸລະກິດທົ່ວໄປ.

ໃນກໍລະນີທີ່ຜູ້ກ່ຽວຂ້ອງ ໄດ້ດຳເນີນທຸລະກຳກັບທະນາຄານທຸລະກິດມາກ່ອນແລ້ວ ກໍສາມາດດຳເນີນຕໍ່ໄດ້ ແຕ່ບໍ່ໃຫ້ມີສິດພິເສດ, ຕ້ອງເປີດເຜີຍໃຫ້ຜູ້ຖືຮຸ້ນຊາບເປັນລາຍລັກອັກສອນ ແລະຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຊາບ.

**ມາດຕາ 48. ການຖືຮຸ້ນຂອງທະນາຄານທຸລະກິດ**

ການຖື ຫຼື ໂອນຮຸ້ນສາມັນ ຂອງທະນາຄານທຸລະກິດ ຊຶ່ງເຮັດໃຫ້ມີຜູ້ຖືຮຸ້ນລາຍໃຫຍ່ ແຕ່ສິບສ່ວນຮ້ອຍຂຶ້ນໄປ ລວມທັງການຄວບທະນາຄານທຸລະກິດ ຕ້ອງໄດ້ຮັບການຮັບຮອງຈາກທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ.

ທະນາຄານທຸລະກິດ ທີ່ມີຄວາມເຂັ້ມແຂງທາງດ້ານການເງິນ ສາມາດຖືຮຸ້ນຢູ່ໃນນິຕິບຸກຄົນອື່ນ ນອກຈາກທຸລະກິດດ້ານການເງິນ ຫຼື ການທະນາຄານໄດ້ ແຕ່ອັດຕາສ່ວນການຖືຮຸ້ນຢູ່ໃນນິຕິບຸກຄົນໜຶ່ງ ແມ່ນບໍ່ໃຫ້ເກີນສິບຫ້າສ່ວນຮ້ອຍຂອງທຶນຕາມລະບຽບການ ແລະບໍ່ເກີນຊາວສ່ວນຮ້ອຍຂອງຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງຂອງນິຕິບຸກຄົນນັ້ນ. ໃນກໍລະນີທີ່ທະນາຄານທຸລະກິດ ຫາກຖືຮຸ້ນຢູ່ໃນນິຕິບຸກຄົນອື່ນຫຼາຍແຫ່ງລວມກັນແລ້ວ ແມ່ນບໍ່ໃຫ້ເກີນແປດສ່ວນຮ້ອຍຂອງຊັບສິນສ່ຽງ.

**ມາດຕາ 49. ການຄວບທຸລະກິດ, ການຊື້ຮຸ້ນ ແລະ ການຂາຍຊັບສິນ**

ທະນາຄານທຸລະກິດ ສາມາດຄວບທຸລະກິດ, ຊື້ຮຸ້ນ ຫຼື ຂາຍຊັບສິນທີ່ສໍາຄັນຂອງຕົນໄດ້ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ແລະການອະນຸຍາດຢ່າງເປັນລາຍລັກອັກສອນຂອງທະນາຄານ ແຫ່ງ ສປປ ລາວ.

ໃນກໍລະນີທີ່ການຊື້ຮຸ້ນ ຫຼື ຂາຍຊັບສິນ ຫາກມີມູນຄ່າຫຼຸດຈໍານວນ ທີ່ໄດ້ກໍານົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ ແລ້ວ ກໍບໍ່ຈໍາເປັນຕ້ອງຂໍອະນຸຍາດ.

## ໝວດທີ III
## ການບັນຊີ, ການກວດສອບ ແລະ ການເປີດເຜີຍຂໍ້ມູນທາງດ້ານການເງິນ

**ມາດຕາ 50. ການບັນຊີ ແລະ ບົດລາຍງານການເງິນ**

ທະນາຄານທຸລະກິດ ຕ້ອງຮັກສາບັນຊີ ແລະຂໍ້ມູນການບັນຊີ ພ້ອມທັງເຮັດບົດລາຍງານການເງິນປະຈໍາປີໃຫ້ຄົບຖ້ວນ ເພື່ອສະແດງໃຫ້ເຫັນການດໍາເນີນງານ ແລະຖານະທາງດ້ານການເງິນຂອງຕົນ ຕາມມາດຕະຖານການບັນຊີ.

ບັນຊີ ແລະບົດລາຍງານທາງດ້ານການເງິນຂອງທະນາຄານທຸລະກິດ ຕ້ອງເຮັດຕາມແບບພິມ ແລະມີລາຍລະອຽດທີ່ສອດຄ່ອງກັບມາດຕະຖານການບັນຊີ ແລະຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວວາງອອກ.

**ມາດຕາ 51. ລາຍຮັບ-ລາຍຈ່າຍ**

ລາຍຮັບ-ລາຍຈ່າຍ ຂອງທະນາຄານທຸລະກິດ ມີດັ່ງນີ້:

1. ລາຍຮັບ:
   - ດອກເບ້ຍ;
   - ເງິນປັນຜົນ;
   - ຄ່າບໍລິການ;
   - ລາຍຮັບອື່ນໆຕາມລະບຽບການ.
2. ລາຍຈ່າຍ:
   - ດອກເບ້ຍ;

- ຄ່າທຳນຽມ;
- ຄ່າບໍລິຫານທຸລະກິດ ແລະວິຊາການ;
- ຄ່າເສື່ອມມູນຄ່າຊັບສິນ;
- ຄ່າຫຼຸ້ຍຫ້ຽນຊັບສິນບັດຄົງທີ່;
- ເງິນແຮ ເພື່ອປະກັນຄວາມສ່ຽງ;
- ລາຍຈ່າຍອື່ນໆຕາມລະບຽບການ.

ສະພາບໍລິຫານເປັນຜູ້ຮັບຮອງເອົາແຜນລາຍຮັບ-ລາຍຈ່າຍ ຂອງທະນາຄານທຸລະກິດ ຕາມການສະເໜີຂອງຜູ້ອຳນວຍການໃຫຍ່ ໂດຍສອດຄ່ອງກັບລະບຽບກົດໝາຍ.

## ມາດຕາ 52. ກຳໄລ ແລະ ການຂາດທຶນ

ກຳໄລຂອງທະນາຄານທຸລະກິດ ແມ່ນສ່ວນຜິດດ່ຽງບວກ ລະຫວ່າງຍອດລາຍຮັບ ແລະຍອດລາຍຈ່າຍໃນປີ. ກຳໄລສຸດທິແມ່ນກຳໄລ ພາຍຫຼັງທີ່ໄດ້ຫັກອາກອນກຳໄລໃຫ້ລັດແລ້ວ.

ທະນາຄານ ຕ້ອງແບ່ງປັນກຳໄລສຸດທິ ດັ່ງນີ້:

- ສ້າງຄັງສະສົມ ຕາມລະບຽບການ;
- ສ້າງຄັງຂະຫຍາຍການຜະລິດ ແລະ ຄັງອື່ນໆ.

ອັດຕາສ່ວນໃນການແບ່ງປັນກຳໄລສຸດທິເຂົ້າແຕ່ລະຄັງ ແມ່ນກອງປະຊຸມຜູ້ຖືຮຸ້ນ ເປັນຜູ້ຕົກລົງໂດຍສອດຄ່ອງກັບລະບຽບກົດໝາຍ, ສ່ວນກຳໄລສຸດທິທີ່ເຫຼືອ ແມ່ນໃຫ້ແບ່ງປັນແກ່ຜູ້ຖືຮຸ້ນ.

ການຂາດທຶນຂອງທະນາຄານທຸລະກິດ ແມ່ນສ່ວນຜິດດ່ຽງລົບ ລະຫວ່າງຍອດລາຍຮັບ ແລະຍອດລາຍຈ່າຍໃນປີ. ໃນກໍລະນີນີ້ໃຫ້ທະນາຄານທຸລະກິດນຳໃຊ້ເງິນໃນຄັງສະສົມຕາມລະບຽບການ. ຖ້າເງິນໃນຄັງສະສົມບໍ່ພຽງພໍ ກໍໃຫ້ເພີ່ມທຶນຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ.

## ມາດຕາ 53. ການໂອນກຳໄລ, ເງິນປັນຜົນ ແລະ ຊັບສິນ ອອກຈາກ ສປປ ລາວ

ທະນາຄານທຸລະກິດຕ່າງປະເທດ ຫຼື ຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ ຊຶ່ງເຄື່ອນໄຫວທຸລະກິດຢູ່ ສປປ ລາວ ສາມາດໂອນເງິນປັນຜົນ, ກຳໄລຂອງຕົນອອກຈາກ ສປປ ລາວ ພາຍຫຼັງທີ່ໄດ້ປະຕິບັດພັນທະທາງດ້ານການເງິນ ແລະ ຫັກເງິນສ້າງຄັງຕ່າງໆ ຕາມລະບຽບກົດໝາຍຂອງ ສປປ ລາວ ໄດ້ກຳນົດໄວ້.

ທະນາຄານຕ່າງປະເທດ ຫຼື ຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ ຊຶ່ງເຄື່ອນໄຫວທຸລະກິດຢູ່ ສປປ ລາວ ສາມາດໂອນຊັບສິນຂອງຕົນອອກຈາກ ສປປ ລາວ ໄດ້ ພາຍຫຼັງທີ່ຢຸດເຊົາການເຄື່ອນໄຫວ ແລະໄດ້ດຳເນີນການຊຳລະສະສາງເປັນທີ່ຮຽບຮ້ອຍແລ້ວ.

## ມາດຕາ 54. ລະບົບການບັນຊີ ແລະ ປີການບັນຊີ

ທະນາຄານທຸລະກິດ ຕ້ອງປະຕິບັດລະບົບການບັນຊີ ຕາມກົດໝາຍ ແລະລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ປີການບັນຊີຂອງທະນາຄານທຸລະກິດ ເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ ຂອງແຕ່ລະປີ.

### ມາດຕາ 55. ການກວດສອບພາຍໃນ

ທະນາຄານທຸລະກິດແຕ່ລະແຫ່ງ ຕ້ອງສ້າງຕັ້ງ ແລະຮັກສາລະບົບການຄຸ້ມຄອງ ແລະກວດສອບວຽກງານພາຍໃນຂອງຕົນ ເພື່ອຮັບປະກັນ:

1. ການບັນທຶກໃຫ້ຖືກຕ້ອງ ໂດຍສະແດງໃຫ້ເຫັນທຸລະກຳ ແລະ ການປ່ຽນແປງຂອງຊັບສິນ;
2. ການສ້າງບົດລາຍງານການເງິນ ໃຫ້ສອດຄ່ອງກັບຫຼັກການດ້ານການບັນຊີ;
3. ການຮັບ-ຈ່າຍເງິນ ໃຫ້ຖືກຕ້ອງກັບການອະນຸມັດຂອງຜູ້ບໍລິຫານ;
4. ການໄດ້ມາ, ການນຳໃຊ້ ຫຼື ການຊຳລະຊັບສິນທີ່ບໍ່ໄດ້ຮັບອະນຸຍາດ ຖືກສະກັດກັ້ນທັນເວລາ.

### ມາດຕາ 56. ການກວດສອບພາຍນອກ

ໃນແຕ່ລະປີ ທະນາຄານທຸລະກິດ ຕ້ອງໄດ້ຮັບການກວດສອບ ໂດຍຜູ້ກວດສອບບັນຊີຈາກພາຍນອກ ເພື່ອ:

1. ຊ່ວຍທະນາຄານທຸລະກິດໃນການຮັກສາລະບົບບັນຊີ ແລະການບັນທຶກບັນຊີໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
2. ມີຄວາມເຫັນຢັ້ງຢືນ ກ່ຽວກັບຄວາມຄົບຖ້ວນ ແລະ ຖືກຕ້ອງຂອງບົດລາຍງານການເງິນປະຈຳປີ ທີ່ທະນາຄານທຸລະກິດສ້າງຂຶ້ນ;
3. ທົບທວນຄືນກ່ຽວກັບຄວາມຄົບຖ້ວນຂອງລະບຽບການຄຸ້ມຄອງ ແລະກວດສອບພາຍໃນພ້ອມທັງໃຫ້ຄຳແນະນຳກ່ຽວກັບມາດຕະການແກ້ໄຂ;
4. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບການກະທຳທີ່ເປັນການສໍ້ໂກງ ຂອງຜູ້ບໍລິຫານ ຫຼື ພະນັກງານ ຂອງທະນາຄານທຸລະກິດ, ການຄຸ້ມຄອງ ແລະດຳເນີນງານທີ່ຜິດປົກກະຕິ ຫຼື ບໍ່ມີປະສິດທິພາບຂອງບໍລິສັດໃນກຸ່ມ ຊຶ່ງອາດຈະສ້າງຜົນເສຍຫາຍໃຫ້ແກ່ທະນາຄານທຸລະກິດ ແລະບໍລິສັດໃນກຸ່ມຂອງຕົນ.

### ມາດຕາ 57. ການພິມເຜີຍແຜ່ບົດລາຍງານການເງິນ

ທະນາຄານທຸລະກິດ ຕ້ອງຈັດພິມເຜີຍແຜ່ຖານະການເງິນຂອງຕົນ ດັ່ງນີ້:

1. ຈັດພິມ ແລະເຜີຍແຜ່ໃບສະຫຼຸບຊັບສິນບັດປະຈຳໄຕມາດ ຢູ່ໜັງສືພິມລະດັບຊາດ ພາຍໃນກຳນົດເວລາ ສາມສິບວັນ ຫຼັງຈາກສິ້ນສຸດແຕ່ລະໄຕມາດ;
2. ຈັດພິມ ແລະ ເຜີຍແຜ່ບົດລາຍງານການເງິນ, ບົດລາຍງານປະຈຳປີ ແລະ ຄຳເຫັນຂອງຜູ້ກວດສອບຕໍ່ບົດລາຍງານການເງິນ ຢູ່ໜັງສືພິມລະດັບຊາດ ພາຍໃນກຳນົດສີ່ເດືອນ ຫຼັງຈາກສິ້ນສຸດປີການບັນຊີ;

3. ສະໜອງບົດລາຍງານປະຈຳປີ ໃຫ້ແກ່ມວນຊົນ ໂດຍບໍ່ມີການເກັບຄ່າໃດໆ.

**ມາດຕາ 58. ການພິມເຜີຍແຜ່ບົດລາຍງານຂອງສາຂາທະນາຄານທຸລະກິດຕ່າງປະເທດ**

ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງພິມເຜີຍແຜ່ໃບສະຫຼຸບຊັບສິນບັດ ແລະບົດລາຍງານຜົນໄດ້ຮັບ ຢູ່ໜັງສືພິມລະດັບຊາດ ພາຍໃນກຳນົດເວລາສາມສິບວັນ ຫຼັງຈາກສິ້ນສຸດແຕ່ລະໄຕມາດ.

ບົດລາຍງານການເງິນຂອງສາຂາທະນາຄານດັ່ງກ່າວ ອາດຈະຈັດພິມຮ່ວມກັບສຳນັກງານໃຫຍ່ກໍໄດ້.

## ໝວດທີ IV
## ທຸລະກິດການທະນາຄານທາງເອເລັກໂຕຼນິກ

**ມາດຕາ 59. ການເຂົ້າຫາຂໍ້ມູນທາງຄອມພິວເຕີ**

ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນທຸລະກິດການທະນາຄານ ທາງເອເລັກໂຕຼນິກ ຕ້ອງສ້າງເງື່ອນໄຂໃຫ້ລູກຄ້າເຂົ້າຫາຂໍ້ມູນທາງລະບົບຄອມພິວເຕີ ຢູ່ທະນາຄານຂອງຕົນ ດ້ວຍການນຳໃຊ້ຊອບແວ ຫຼື ອິນເຕີເນັດ ເພື່ອສາມາດເຮັດທຸລະກຳກັບທະນາຄານເຊັ່ນ: ການໂອນເງິນລະຫວ່າງບັນຊີດ້ວຍກັນ, ການຊຳລະ ຫຼື ການສະເໜີຂໍສິນເຊື່ອຜ່ານຄອມພິວເຕີ.

ທະນາຄານທຸລະກິດ ທີ່ອະນຸຍາດໃຫ້ລູກຄ້າຂອງຕົນ ນຳໃຊ້ລະບົບຄອມພິວເຕີໄດ້ນັ້ນ ຕ້ອງ:

1. ສະໜອງລະບຽບການ ກ່ຽວກັບການຮັກສາຄວາມລັບ ໃຫ້ແກ່ລູກຄ້າຂອງຕົນຊາບ;
2. ອະນຸຍາດໃຫ້ລູກຄ້າຂອງຕົນ ແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງ ຊຶ່ງຮັກສາໄວ້ຢູ່ທະນາຄານທຸລະກິດ ກັບເຄືອຂ່າຍ ຫຼື ກັບບຸກຄົນທີສາມ ທີ່ບໍ່ແມ່ນເຄືອຂ່າຍຂອງຕົນ;
3. ມີລະບົບຮັກສາຄວາມປອດໄພທີ່ເໝາະສົມກັບລະບົບອິນເຕີເນັດ ແລະ ລະບົບຄອມພິວເຕີຂອງຕົນ.

**ມາດຕາ 60. ທະນາຄານທຸລະກິດທາງອິນເຕີເນັດ**

ທະນາຄານທຸລະກິດທາງອິນເຕີເນັດ ສາມາດສ້າງຕັ້ງຂຶ້ນ ເພື່ອໃຫ້ການບໍລິການແກ່ລູກຄ້າ ໂດຍຜ່ານລະບົບບໍລິການທາງດ້ານເອເລັກໂຕຼນິກ ແຕ່ບໍ່ມີຫ້ອງການ ເພື່ອໃຫ້ການບໍລິການ.

ທະນາຄານທຸລະກິດທາງອິນເຕີເນັດ ຕ້ອງມີລະບົບທີ່ເໝາະສົມໃນການກຳນົດ, ຕິດຕາມ ກວດກາ ແລະ ຄວບຄຸມຄວາມສ່ຽງ ໃນການດຳເນີນທຸລະກິດຈາກການນຳໃຊ້ເຕັກໂນໂລຊີຂອງຕົນ.

ທະນາຄານທຸລະກິດທາງອິນເຕີເນັດ ຕ້ອງມີການຮັບປະກັນຄວາມປອດໄພທີ່ເໝາະສົມ ສຳລັບການດຳເນີນວຽກງານທາງອິນເຕີເນັດ.

ທະນາຄານທຸລະກິດທາງອິນເຕີເນັດ ສາມາດໃຫ້ການບໍລິການແກ່ລູກຄ້າຂອງຕົນ ໂດຍຜ່ານບຸກຄົນທີສາມ ຊຶ່ງຕ້ອງຢູ່ພາຍໃຕ້ການຄຸ້ມຄອງກວດກາຂອງທະນາຄານແຫ່ງ ສປປ ລາວ. ທະນາຄານທຸລະກິດທາງອິນເຕີເນັດ ອາດຈະໄດ້ຮັບຄ່າບໍລິການຈາກລູກຄ້າທີ່ໄປໃຊ້ບໍລິການຂອງບຸກຄົນທີສາມ.

ລະບຽບການ ກ່ຽວກັບການເຄື່ອນໄຫວຂອງທຸລະກິດການທະນາຄານທາງເອເລັກໂຕຼນິກ ແລະທາງອິນເຕີເນັດ ໄດ້ກຳນົດໄວ້ຕ່າງຫາກ.

## ພາກທີ IV
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 61. ອົງການຄຸ້ມຄອງ ແລະກວດກາ**

ລັດຖະບານ ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບ ກ່ຽວກັບການສ້າງຕັ້ງ ແລະເຄື່ອນໄຫວຂອງທະນາຄານທຸລະກິດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ແລະກວດກາ.

ອົງການຄຸ້ມຄອງ ແລະ ກວດກາ ປະກອບດ້ວຍ:

1. ທະນາຄານແຫ່ງ ສປປ ລາວ;
2. ສາຂາທະນາຄານແຫ່ງ ສປປ ລາວ.

**ມາດຕາ 62. ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດຍຸດທະສາດ, ນະໂຍບາຍກ່ຽວກັບວຽກງານທະນາຄານ ແລະແຜນງານພັດທະນາລະບົບທະນາຄານ;
2. ອອກນິຕິກຳ ເພື່ອຜັນຂະຫຍາຍຍຸດທະສາດ, ນະໂຍບາຍກ່ຽວກັບວຽກງານທະນາຄານ;
3. ໂຄສະນາເຜີຍແຜ່, ຊີ້ນຳ, ຊຸກຍູ້ ແລະກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບວຽກງານທະນາຄານໃນຂອບເຂດທົ່ວປະເທດ;
4. ຄຸ້ມຄອງທະນາຄານທຸລະກິດໃນຂອບເຂດທົ່ວປະເທດ;
5. ອອກ ແລະຖອນ ໃບອະນຸຍາດສ້າງຕັ້ງທະນາຄານທຸລະກິດ;
6. ນຳໃຊ້ມາດຕະການ ເພື່ອສະກັດກັ້ນການເຄື່ອນໄຫວ ທີ່ມີການລະເມີດລະບຽບກົດໝາຍກ່ຽວກັບທະນາຄານ;
7. ກໍ່ສ້າງ, ບຳລຸງພະນັກງານທາງດ້ານວິຊາການການທະນາຄານ;
8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;
9. ພົວພັນກັບຕ່າງປະເທດ, ເຊັ່ນ ຫຼື ເຂົ້າຮ່ວມສົນທິສັນຍາສາກົນ ໃນວຽກງານທະນາຄານຕາມການມອບໝາຍຂອງລັດຖະບານ;
10. ລາຍງານຜົນຂອງການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ລັດຖະບານ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 63. ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ**

ສາຂາທະນາຄານແຫ່ງ ສປປ ລາວ ປະຕິບັດສິດ ແລະໜ້າທີ່ ກ່ຽວກັບການຄຸ້ມຄອງທະນາຄານທຸລະກິດ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ ຊຶ່ງລາຍລະອຽດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 64. ສິດ ແລະ ໜ້າທີ່ ຂອງຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ**

ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ກວດກາການປະຕິບັດລະບຽບການຮັກສາຄວາມໝັ້ນຄົງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງກັບທະນາຄານທຸລະກິດ;
2. ກວດກາບັນຊີ, ເອກະສານ, ຂໍ້ມູນທາງດ້ານເອເລັກໂຕຼນິກ ແລະບົດບັນທຶກຕ່າງໆ ຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ;
3. ທວງໃຫ້ຜູ້ບໍລິຫານ, ພະນັກງານ ແລະນາຍໜ້າຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ ສົ່ງຂໍ້ມູນທີ່ກ່ຽວຂ້ອງກັບການບໍລິຫານ ແລະການດຳເນີນວຽກງານ;
4. ເຂົ້າກວດກາທະນາຄານທຸລະກິດບ່ອນທີ່ສົງໃສວ່າ ມີການລະເມີດລະບຽບກົດໝາຍ ແລະ ຍຶດເອກະສານຕ່າງໆ ທີ່ຕິດພັນກັບການລະເມີດນັ້ນ;
5. ເປີດກອງປະຊຸມຮ່ວມກັບສະພາບໍລິຫານ ແລະຜູ້ບໍລິຫານຈັດການ ຂອງທະນາຄານທຸລະກິດ ໃນທຸກໆທຶກເດືອນ ເພື່ອຕີລາຄາຜົນຂອງການປະຕິບັດກົດໝາຍສະບັບນີ້ ແລະລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 65. ການລາຍງານຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ຕ້ອງປະຕິບັດລະບອບລາຍງານ ເພື່ອໃຫ້ທະນາຄານແຫ່ງ ສປປ ລາວ ສາມາດກວດກາການເຄື່ອນໄຫວຂອງຕົນ ດັ່ງນີ້:

1. ການລາຍງານ ຕາມລະບອບການລາຍງານກ່ຽວກັບການບໍລິຫານ, ການດຳເນີນງານ ແລະສະພາບທາງດ້ານການເງິນຂອງຕົນ ແລະບໍລິສັດໃນກຸ່ມ;
2. ການລາຍງານ ຕາມການທວງຖາມຂອງທະນາຄານ ແຫ່ງ ສປປ ລາວ ເຊັ່ນ: ການລາຍງານ ກ່ຽວກັບເຄືອຂ່າຍຂອງທະນາຄານທຸລະກິດ, ຜູ້ສະໜອງການບໍລິການດ້ານວິຊາຊີບ ແລະ ຜູ້ດຳເນີນການໃດໜຶ່ງໃຫ້ແກ່ທະນາຄານທຸລະກິດ ຊຶ່ງຕ້ອງສະໜອງຂໍ້ມູນກ່ຽວກັບວຽກງານ ແລະ ສາຍພົວພັນຂອງຕົນ ແລະອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 66. ການກວດກາທະນາຄານທຸລະກິດຢູ່ພາຍໃນປະເທດ**

ທະນາຄານທຸລະກິດ, ບໍລິສັດໃນກຸ່ມ, ສາຂາ ແລະຫ້ອງການຜູ້ຕາງໜ້າ ຂອງທະນາຄານຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ຕ້ອງຢູ່ໃຕ້ການກວດກາຂອງທະນາຄານແຫ່ງ ສປປ ລາວ ຫຼື ຜູ້ກວດກາ ທີ່ຖືກແຕ່ງຕັ້ງໂດຍທະນາຄານແຫ່ງ ສປປ ລາວ.

ຖ້າຫາກແມ່ນການກວດກາບໍລິສັດໃນກຸ່ມ, ສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຂອງທະນາຄານທຸລະກິດຕ່າງປະເທດ ຜູ້ກວດກາທີ່ຖືກແຕ່ງຕັ້ງໂດຍທະນາຄານແຫ່ງ ສປປ ລາວ ອາດຈະປະກອບດ້ວຍເຈົ້າໜ້າທີ່ຈາກອົງການກວດກາຂອງປະເທດ ບ່ອນທີ່ສຳນັກງານໃຫຍ່ຂອງທະນາຄານທຸລະກິດນັ້ນຕັ້ງຢູ່; ອົງການກວດກາທະນາຄານທຸລະກິດຂອງປະເທດທີ່ສຳນັກງານໃຫຍ່ຕັ້ງຢູ່ກໍສາມາດດຳເນີນການກວດກາໄດ້ເຊັ່ນດຽວກັນ.

ທະນາຄານແຫ່ງ ສປປ ລາວ ຕ້ອງກວດກາບໍລິສັດໃນກຸ່ມ, ສາຂາ ແລະຫ້ອງການຜູ້ຕາງໜ້າ ຂອງທະນາຄານທຸລະກິດຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ບົນພື້ນຖານລະບຽບຫຼັກການອັນດຽວກັນກັບທະນາຄານທຸລະກິດທີ່ສ້າງຕັ້ງຂຶ້ນ ຢູ່ ສປປ ລາວ.

ທະນາຄານທຸລະກິດ, ບໍລິສັດໃນກຸ່ມ, ສາຂາ ແລະຫ້ອງການຜູ້ຕາງໜ້າ ຂອງທະນາຄານທຸລະກິດທີ່ຖືກກວດກາ ຕ້ອງໃຫ້ຄວາມຮ່ວມມືຢ່າງເຕັມສ່ວນ ກັບຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ແລະຜູ້ກວດກາທີ່ຖືກແຕ່ງຕັ້ງໂດຍທະນາຄານແຫ່ງ ສປປ ລາວ.

ຫ້າມບຸກຄົນ ຫຼື ການຈັດຕັ້ງ ສ້າງຄວາມຫຍຸ້ງຍາກ ຫຼື ກີດກັ້ນ ການກວດກາຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 67. ການກວດກາຢູ່ນອກປະເທດ**

ທະນາຄານແຫ່ງ ສປປ ລາວ ດຳເນີນການກວດກາບໍລິສັດໃນກຸ່ມ, ສາຂາ ແລະຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດລາວທີ່ຕັ້ງຢູ່ຕ່າງປະເທດ.

ໃນການກວດການັ້ນ ທະນາຄານແຫ່ງ ສປປ ລາວ ອາດຈະປະສານສົມທົບ ແລະ ແລກປ່ຽນຂໍ້ມູນກັບຜູ້ກວດກາທະນາຄານທຸລະກິດ ແລະອົງການຈັດຕັ້ງປະຕິບັດກົດໝາຍຂອງຕ່າງປະເທດ.

**ມາດຕາ 68. ການເສຍຄ່າທຳນຽມການຄຸ້ມຄອງກວດກາປະຈຳປີ**

ທະນາຄານທຸລະກິດ ຕ້ອງເສຍຄ່າທຳນຽມການຄຸ້ມຄອງກວດກາປະຈຳປີ ແກ່ທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

**ມາດຕາ 69. ການຮ້ອງຟ້ອງທະນາຄານແຫ່ງ ສປປ ລາວ**

ທະນາຄານທຸລະກິດ ມີສິດຮ້ອງຟ້ອງຕໍ່ສານ ຖ້າທະນາຄານແຫ່ງ ສປປ ລາວ, ພະນັກງານ ຫຼື ຕົວແທນຂອງທະນາຄານແຫ່ງ ສປປ ລາວ ຫາກລະເມີດກົດໝາຍສະບັບນີ້ ແລະໄດ້ສ້າງຜົນເສຍຫາຍໃຫ້ແກ່ຕົນ. ການຮ້ອງຟ້ອງດັ່ງກ່າວ ຈະບໍ່ເຮັດໃຫ້ການເຄື່ອນໄຫວຂອງທະນາຄານ ແຫ່ງ ສປປ ລາວ ທີ່ພົວພັນເຖິງບັນຫາ

ບັນຍຸດເຊົາລົງ ເວັ້ນເສັຍແຕ່ມີຄຳສັ່ງຂອງສານ ທີ່ເຫັນວ່າການກະທຳດັ່ງກ່າວຈະສ້າງຜົນເສັຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ທະນາຄານທຸລະກິດ.

## ພາກທີ V
## ການລົ້ມລະລາຍ

### ໝວດທີ I
### ການຟື້ນຟູ ແລະ ການລົ້ມລະລາຍ

**ມາດຕາ 70. ການສະເໜີຟື້ນຟູທະນາຄານທຸລະກິດ**

ເມື່ອທະນາຄານທຸລະກິດ ພົບຄວາມຫຍຸ້ງຍາກທາງດ້ານການເງິນ ແລະຂາດຄວາມໝັ້ນຄົງ ຊຶ່ງອາດຈະພາໃຫ້ມີການລົ້ມລະລາຍນັ້ນ ທະນາຄານແຫ່ງ ສປປລາວ ຈະພິຈາລະນາຕົກລົງການຟື້ນຟູຕາມການສະເໜີຂອງເຈົ້າໜີ້, ທະນາຄານທຸລະກິດ ຫລື ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 71. ການດຳເນີນການຟື້ນຟູ**

ພາຍຫລັງທີ່ໄດ້ຕົກລົງເຫັນດີແລ້ວ ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະຟື້ນຟູ ເຂົ້າໄປຄວບຄຸມທະນາຄານທຸລະກິດ ເພື່ອດຳເນີນການຟື້ນຟູໃນກຳນົດເວລາສາມເດືອນ ນັບແຕ່ວັນແຕ່ງຕັ້ງຄະນະດັ່ງກ່າວນີ້ ເປັນຕົ້ນໄປ. ໃນກໍລະນີທີ່ມີຄວາມຈຳເປັນ ຈະຕໍ່ກຳນົດເວລາຟື້ນຟູໄດ້ຕື່ມອີກ ຄັ້ງລະສາມເດືອນ ກໍໄດ້ ແຕ່ທັງໝົດບໍ່ໃຫ້ເກີນໜຶ່ງປີ.

ໃນເວລາດຳເນີນການຟື້ນຟູນັ້ນ ທະນາຄານທຸລະກິດ ກໍສາມາດເຄື່ອນໄຫວທຸລະກິດ ຂອງຕົນໄດ້ ແຕ່ຕ້ອງປະຕິບັດຕາມແຜນການຟື້ນຟູ.

**ມາດຕາ 72. ສິດ ແລະໜ້າທີ່ ຂອງຄະນະຟື້ນຟູ**

ຄະນະຟື້ນຟູ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳສະພາບໍລິຫານ, ຜູ້ບໍລິຫານຂອງທະນາຄານທຸລະກິດ ເພື່ອສ້າງ ແລະ ຈັດຕັ້ງປະຕິບັດແຜນຟື້ນຟູ;
2. ສັ່ງໃຫ້ຢຸດເຊົາການເຄື່ອນໄຫວຕ່າງໆ ຂອງທະນາຄານທຸລະກິດ ທີ່ບໍ່ສອດຄ່ອງກັບແຜນຟື້ນຟູ ແລະ ການເຄື່ອນໄຫວທີ່ຈະສ້າງຜົນເສຍຫາຍໃຫ້ແກ່ທະນາຄານທຸລະກິດ;
3. ສັ່ງໃຫ້ສະພາບໍລິຫານ, ຜູ້ບໍລິຫານ ປົດຕຳແໜ່ງພະນັກງານທີ່ລະເມີດລະບຽບກົດໝາຍ ຫຼື ບໍ່ຈັດຕັ້ງປະຕິບັດແຜນຟື້ນຟູ;
4. ສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາຕໍ່ເວລາ ຫຼື ຢຸດເຊົາການຟື້ນຟູ;
5. ຮັບຜິດຊອບຕໍ່ການເຄື່ອນໄຫວຟື້ນຟູຂອງຕົນ;

6. ລາຍງານການເຄື່ອນໄຫວຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 73. ການລົ້ມລະລາຍຂອງທະນາຄານທຸລະກິດ**

ພາຍຫລັງທີ່ດຳເນີນການຟື້ນຟູແລ້ວ ແຕ່ທະນາຄານທຸລະກິດກໍຍັງບໍ່ສາມາດເຄື່ອນໄຫວທຸລະກິດຂອງຕົນຕາມປົກກະຕິໄດ້ ເປັນຕົ້ນ ບໍ່ສາມາດຊຳລະໜີ້ສິນຂອງຕົນໄດ້ຢ່າງຄົບຖ້ວນ ແລະຖືກຕ້ອງຕາມກຳນົດ, ມູນຄ່າໜີ້ສິນເກີນມູນຄ່າຊັບສິນ ຫລື ທຶນໜ້ອຍກວ່າ ໜຶ່ງສ່ວນສີ່ ຂອງລະດັບຕ່ຳສຸດຂອງທຶນ ຕາມລະບຽບການທະນາຄານແຫ່ງ ສປປ ລາວ ຈຶ່ງສະເໜີຕໍ່ສານເພື່ອພິຈາລະນາຕັດສິນກ່ຽວກັບການລົ້ມລະລາຍຂອງທະນາຄານທຸລະກິດນັ້ນ.

ເມື່ອສານໄດ້ຕັດສິນໃຫ້ທະນາຄານທຸລະກິດລົ້ມລະລາຍແລ້ວ ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະຊຳລະສະສາງ.

**ມາດຕາ 74. ຄະນະຊຳລະສະສາງ**

ຄະນະຊຳລະສະສາງ ປະກອບດ້ວຍ ບຸກຄົນທີ່ມາຈາກທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈາກພາກລັດ ແລະເອກະຊົນ ຊຶ່ງມີຄຸນວຸດທິ ແລະເງື່ອນໄຂ ຕາມທີ່ກຳນົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 75. ສິດ ແລະ ໜ້າທີ່ ຂອງຄະນະຊຳລະສະສາງ**

ຄະນະຊຳລະສະສາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບທັງໝົດ ຄືກັນກັບຜູ້ບໍລິຫານ ແລະຜູ້ຖືຮຸ້ນຂອງທະນາຄານທຸລະກິດ;
2. ສືບຕໍ່ດຳເນີນວຽກງານຕ່າງໆ ຂອງທະນາຄານທຸລະກິດ ເວັ້ນເສຍແຕ່ການຮັບເງິນຝາກ, ການສະໜອງສິນເຊື່ອ, ການຈ່າຍເງິນທີ່ຕິດພັນກັບພັນທະຕາມສັນຍາ ແລະ ທຸລະກຳອື່ນໆ ຕາມທີ່ຕົນເຫັນວ່າມີຄວາມຈຳເປັນຕ້ອງຢຸດຕິ;
3. ຄວບຄຸມຫ້ອງການ, ປຶ້ມບັນຊີ, ປຶ້ມບັນທຶກຕ່າງໆ ແລະຊັບສິນ ຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ;
4. ປົກປັກຮັກສາຊັບສິນຂອງທະນາຄານທຸລະກິດ ບໍ່ໃຫ້ຕົກເຮ່ຍເສຍຫາຍ;
5. ຂຶ້ນບັນຊີເຈົ້າໜີ້, ລູກໜີ້; ສຳຫຼວດ, ຂຶ້ນບັນຊີຊັບສິນ ແລະສ້າງໃບສະຫຼຸບຊັບສິນບັດຂອງທະນາຄານທຸລະກິດຄືນໃໝ່ ແລ້ວສົ່ງສຳເນົາໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ພ້ອມທັງພິມເຜີຍແຜ່ຢ່າງກວ້າງຂວາງ ຜ່ານສື່ມວນຊົນ;
6. ກຳນົດຈຳນວນເງິນ ທີ່ສາມາດຖອນໄດ້ໂດຍຜູ້ຝາກເງິນ ຫຼື ຊຳລະຄືນໃຫ້ເຈົ້າໜີ້ ຕາມບູລິມະສິດ;
7. ລົບລ້າງສັນຍາຂອງທະນາຄານທຸລະກິດ ທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງ;

8. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຊາບໃນທຸກໆເດືອນ ກ່ຽວກັບຄວາມຄືບໜ້າຂອງການຊໍາລະສະສາງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມລະບຽບກົດໝາຍ.

ຖ້າຫາກຄະນະຊໍາລະສະສາງ ລະເມີດລະບຽບກົດໝາຍໃນການປະຕິບັດສິດ ແລະໜ້າທີ່ ທີ່ກ່າວເທິງນີ້ ຈະຖືກປົດ ຫຼື ປະຕິບັດວິໄນ ໂດຍທະນາຄານແຫ່ງ ສປປ ລາວ.

**ມາດຕາ 76. ຜົນສະທ້ອນຂອງການເຂົ້າຊໍາລະສະສາງ**

ຜົນສະທ້ອນຂອງການເຂົ້າຊໍາລະສະສາງ ຕໍ່ທະນາຄານທຸລະກິດທີ່ລົ້ມລະລາຍ ມີດັ່ງນີ້:

1. ສິດຂອງທະນາຄານທຸລະກິດ ທີ່ເກີດຈາກກົດໝາຍ, ສັນຍາ ຫຼື ດ້ວຍວິທີການອື່ນ ຊຶ່ງໄດ້ສິ້ນສຸດ ຫຼື ຈະສິ້ນສຸດລົງ ຕ້ອງໄດ້ຕໍ່ກໍານົດເວລາອອກໄປອີກຫົກເດືອນ ນັບແຕ່ວັນທີ່ຄະນະຊໍາລະສະສາງເຂົ້າປະຕິບັດໜ້າທີ່ເປັນຕົ້ນໄປ;
2. ການອາຍັດ ຫຼື ການຄໍ້າປະກັນຊັບສິນ ຫຼື ຊັບສິນບັດອື່ນໆ ຂອງທະນາຄານທຸລະກິດ ໃນເວລາມີການຊໍາລະສະສາງນັ້ນຈະຖືກຍົກເລີກ ເວັ້ນເສັຍແຕ່ໃນກໍລະນີທີ່ການອາຍັດ ຫຼື ການຄໍ້າປະກັນດັ່ງກ່າວ ຫາກເກີດຂຶ້ນຫົກເດືອນກ່ອນວັນທີ່ທະນາຄານແຫ່ງ ສປປ ລາວ ຮັບເອົາການລົ້ມລະລາຍ ຫຼື ວັນທີ່ທະນາຄານແຫ່ງ ສປປ ລາວ ສະເໜີໃຫ້ສານພິຈາລະນາຕັດສິນລົ້ມລະລາຍ ເປັນຕົ້ນໄປ;
3. ສິດຂອງຜູ້ຖືຮຸ້ນແມ່ນຈະຖືກຍົກເລີກ ເວັ້ນເສັຍແຕ່ສິດໃນການໄດ້ຮັບເງິນຈາກການແບ່ງປັນຊັບສິນທີ່ຍັງເຫຼືອຈາກການຊໍາລະສະສາງ.

**ມາດຕາ 77. ຄ່າໃຊ້ຈ່າຍໃນການຊໍາລະສະສາງ**

ຄ່າໃຊ້ຈ່າຍໃນການຊໍາລະສະສາງ ແມ່ນທະນາຄານທຸລະກິດ ທີ່ຖືກລົ້ມລະລາຍ ເປັນຜູ້ຮັບຜິດຊອບບົນພື້ນຖານຊັບສິນທີ່ມີຕົວຈິງ ຕາມການພິຈາລະນາຂອງຄະນະຊໍາລະສະສາງ.

**ມາດຕາ 78. ບູລິມະສິດໃນການຊໍາລະສະສາງ**

ການຊໍາລະສະສາງຊັບສິນຂອງທະນາຄານທຸລະກິດ ໃຫ້ປະຕິບັດຕາມລໍາດັບບູລິມະສິດ ດັ່ງນີ້:

1. ຈ່າຍໃນການດໍາເນີນການຊໍາລະສະສາງ;
2. ຈ່າຍຄືນເງິນຝາກ;
3. ຈ່າຍເງິນເດືອນ ແລະ ຄ່າແຮງງານຂອງພະນັກງານທະນາຄານທຸລະກິດ;
4. ພັນທະຕໍ່ລັດທີ່ບໍ່ຂຶ້ນກັບສັນຍາ;
5. ໃຊ້ແທນໜີ້ສິນທີ່ມີການຄໍ້າປະກັນຕາມສັນຍາ;
6. ໃຊ້ແທນໜີ້ສິນທີ່ບໍ່ມີການຄໍ້າປະກັນ;
7. ແບ່ງປັນໃຫ້ຜູ້ຖືຮຸ້ນຂອງທະນາຄານທຸລະກິດ.

**ມາດຕາ 79. ການລາຍງານຄັ້ງສຸດທ້າຍຂອງຄະນະຊໍາລະສະສາງ**

ພາຍຫຼັງການດໍາເນີນການຊໍາລະສະສາງແລ້ວ ຄະນະຊໍາລະສະສາງ ຕ້ອງເຮັດບົດລາຍງານໃຫ້ແກ່ທະນາຄານແຫ່ງ ສປປ ລາວ ແລະພາກສ່ວນຈັດຕັ້ງປະຕິບັດຄໍາຕັດສິນຂອງສານທີ່ກ່ຽວຂ້ອງຊາບ.

ຫຼັງຈາກທະນາຄານແຫ່ງ ສປປ ລາວ ໄດ້ຮັບຮອງເອົາບົດລາຍງານດັ່ງກ່າວແລ້ວ ຄະນະຊໍາລະສະສາງ ຈະໝົດຄວາມຮັບຜິດຊອບ ແລະຖືວ່າການຊໍາລະສະສາງສິ້ນສຸດລົງ.

**ມາດຕາ 80. ການຍຸບເລີກ ແລະການຖອນໃບອະນຸຍາດສ້າງຕັ້ງ**

ທະນາຄານແຫ່ງ ສປປລາວ ຈະຕົກລົງຍຸບເລີກ ແລະຖອນໃບອະນຸຍາດສ້າງຕັ້ງ ທະນາຄານທຸລະກິດຄືນ ໃນກໍລະນີດັ່ງນີ້:

1. ຕາມການຮ້ອງຂໍຂອງທະນາຄານທຸລະກິດເອງ ໂດຍອີງໃສ່ມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ;
2. ມີການລະເມີດລະບຽບການຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 82 ຂອງກົດໝາຍສະບັບນີ້;
3. ໄດ້ຮັບອະນຸຍາດສ້າງຕັ້ງບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
4. ບໍ່ດໍາເນີນທຸລະກິດຂອງຕົນ ພາຍໃນກໍານົດເວລາເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດສ້າງຕັ້ງເປັນຕົ້ນໄປ;
5. ນິຕິບຸກຄົນອື່ນ ທີ່ມີຜົນປະໂຫຍດສໍາຄັນຢູ່ໃນທະນາຄານທຸລະກິດນີ້ ໄດ້ຖືກຖອນໃບອະນຸຍາດ;
6. ມີການຄວບທະນາຄານທຸລະກິດເຂົ້າກັນ ຊຶ່ງພາໃຫ້ທະນາຄານທຸລະກິດດັ່ງກ່າວ ເສຍຖານະນິຕິບຸກຄົນ ຫລື ມີການຂາຍກິດຈະການຂອງທະນາຄານທຸລະກິດ;
7. ການດໍາເນີນງານຂອງທະນາຄານທຸລະກິດ ໃນໄລຍະສາມປີທໍາອິດບໍ່ເປັນໄປຕາມແຜນທຸລະກິດ ທີ່ໄດ້ສະເໜີຂໍອະນຸຍາດສ້າງຕັ້ງ ໂດຍບໍ່ມີເຫດຜົນພຽງພໍ;
8. ສາຂາຂອງທະນາຄານທຸລະກິດຕ່າງປະເທດທີ່ມາສ້າງຕັ້ງຢູ່ ສປປ ລາວ ຊຶ່ງສໍານັກງານໃຫຍ່ໄດ້ຖືກຖອນໃບອະນຸຍາດ ຢູ່ປະເທດຂອງຕົນ.

ໃນການຍຸບເລີກ ແລະ ຖອນໃບອະນຸຍາດສ້າງຕັ້ງນັ້ນ ທະນາຄານ ແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອດໍາເນີນການຊໍາລະສະສາງ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 81. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວດ້ານການທະນາຄານ ແລະໄດ້ປະກອບສ່ວນອັນສໍາຄັນໃນການສົ່ງເສີມການດໍາເນີນທຸລະກິດການທະນາຄານ ແລະ ຕ້ານການລະເມີດກົດ

ໝາຍໃນຂົງເຂດການທະນາຄານ ຈະໄດ້ຮັບການຍ້ອງຍໍ ແລະນະໂຍບາຍອື່ນ ຕາມລະບຽບການໄດ້ກຳນົດໄວ້.

**ມາດຕາ 82. ມາດຕະການຕໍ່ຜູ້ລະເມີດ**

ທະນາຄານທຸລະກິດ, ຜູ້ບໍລິຫານ, ຜູ້ຖືຮຸ້ນລາຍໃຫຍ່ ແລະ ພະນັກງານຂອງທະນາຄານທຸລະກິດ ຫາກລະເມີດກົດໝາຍສະບັບນີ້ ຫຼື ລະບຽບການກ່ຽວກັບທະນາຄານທຸລະກິດ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີເປັນການລະເມີດທີ່ເບົາບາງ ຈະຖືກ:
    1.1. ກ່າວເຕືອນເປັນລາຍລັກອັກສອນ;
    1.2. ປັບໃໝ ຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໄວ້.
2. ກໍລະນີທີ່ໄດ້ປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຂອງມາດຕານີ້ແລ້ວ ຍັງສືບຕໍ່ລະເມີດ ຫຼື ເປັນການລະເມີດທີ່ໜັກໜ່ວງ ຈະຖືກ:
    2.1. ປັບໃໝທະນາຄານທຸລະກິດ, ຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່ ແຕ່ 1.000.000 ກີບ ຫາ 10.000.000 ກີບ;
    2.2. ໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ;
    2.3. ຈຳກັດການລະດົມທຶນ ຫຼື ປ່ອຍສິນເຊື່ອ;
    2.4. ຖອນໃບອະນຸຍາດສ້າງຕັ້ງ ແລະດຳເນີນການຊຳລະສະສາງ;
    2.5. ດຳເນີນຄະດີຕາມກົດໝາຍ.

**ມາດຕາ 83. ມາດຕະການຕໍ່ການລະເມີດອັດຕາສ່ວນຄວາມພຽງພໍຂອງທຶນ**

ທະນາຄານທຸລະກິດຫາກມີທຶນຕ່ຳກວ່າທຶນຕ່ຳສຸດ ຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ, ນອກຈາກຈະຖືກປະຕິບັດມາດຕະການທີ່ກຳນົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້ແລ້ວ ທະນາຄານແຫ່ງ ສປປ ລາວ ອາດຈະນຳໃຊ້ມາດຕະການເພີ່ມເຕີມໃດໜຶ່ງ ດັ່ງນີ້:

1. ກຳນົດໃຫ້ຊັບສິນສະເລ່ຍທັງໝົດຂອງທະນາຄານທຸລະກິດ ຢູ່ໃນແຕ່ລະໄຕມາດຂອງປີ ບໍ່ໃຫ້ເກີນຊັບສິນທັງໝົດ ຢູ່ໃນໄລຍະດຽວກັນຂອງປີການເງິນຜ່ານມາ;
2. ບໍ່ໃຫ້ທະນາຄານທຸລະກິດ ຊື້ຮຸ້ນຢູ່ໃນນິຕິບຸກຄົນອື່ນ ຫຼື ດຳເນີນງານໃດໜຶ່ງ ຫຼື ສ້າງຕັ້ງຫ້ອງການສາຂາໃດໜຶ່ງເພີ່ມເຕີມ ຫຼື ໄປລົງທຶນໃນທຸລະກິດອື່ນ;
3. ບໍ່ໃຫ້ທະນາຄານທຸລະກິດປ່ອຍສິນເຊື່ອ ໃຫ້ແກ່ບໍລິສັດໃນກຸ່ມ ເວັ້ນເສຍແຕ່ສິນເຊື່ອດັ່ງກ່າວມີການຄ້ຳປະກັນ ດ້ວຍຫຼັກຊັບທີ່ມີສະພາບຄ່ອງຊື້ງອອກ ຫຼື ມີການຄ້ຳປະກັນ ໂດຍລັດຖະບານແຫ່ງ ສປປ ລາວ ທີ່ມີມູນຄ່າເກີນກວ່າ ໜຶ່ງຮ້ອຍຊາວຫ້າສ່ວນຮ້ອຍ ຂອງມູນຄ່າສິນເຊື່ອ;

4. ໃຫ້ທະນາຄານທຸລະກິດ ຫຼື ສາຂາຂອງຕົນ ຕ້ອງປ່ຽນແປງ, ຫຼຸດຜ່ອນ ຫຼື ຍົກເລີກວຽກງານໃດໜຶ່ງ ທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າສ້າງຄວາມເສຍຫາຍທີ່ຮ້າຍແຮງ ຕໍ່ທະນາຄານທຸລະກິດ;
5. ໃຫ້ທະນາຄານທຸລະກິດປົດຜູ້ບໍລິຫານທີ່ບໍ່ມີຄວາມເໝາະສົມ ທີ່ຢູ່ໃນຕໍາແໜ່ງຫຼາຍກວ່າໜຶ່ງຮ້ອຍແປດສິບວັນ ກ່ອນທີ່ທະນາຄານທຸລະກິດນັ້ນ ຈະມີທຶນຕໍ່າກວ່າລະບຽບການ ຕາມທີ່ທະນາຄານແຫ່ງ ສປປ ລາວ ໄດ້ກໍານົດໄວ້;
6. ໃຫ້ທະນາຄານທຸລະກິດຖອນທຶນ ຫຼື ຊໍາລະສະສາງບໍລິສັດໃນກຸ່ມຂອງຕົນ ຖ້າທະນາຄານແຫ່ງ ສປປ ລາວ ເຫັນວ່າບໍລິສັດໃນກຸ່ມ ໄດ້ຕົກຢູ່ໃນສະພາບທີ່ເປັນອັນຕະລາຍ ຊຶ່ງຈະນໍາໄປສູ່ການລົ້ມລະລາຍ ຫຼື ສ້າງຄວາມເສຍຫາຍທີ່ຮ້າຍແຮງຕໍ່ທະນາຄານທຸລະກິດ;
7. ບໍ່ໃຫ້ຜູ້ບໍລິຫານຮັບເງິນບໍາເນັດປະຈໍາປີ ໃນປີທີ່ມີການລະເມີດລະບຽບ ກ່ຽວກັບການຮັກສາລະດັບທຶນຕໍ່າສຸດຕາມລະບຽບການ.

**ມາດຕາ 84. ມາດຕະການຕໍ່ການລະເມີດກ່ຽວກັບການປ່ອຍສິນເຊື່ອ**

ສະມາຊິກສະພາບໍລິຫານ ຜູ້ທີ່ໄດ້ຕົກລົງປ່ອຍສິນເຊື່ອເກີນຂອບເຂດທີ່ກໍານົດໄວ້ໃນຂໍ້ 2 ແລະ 3 ໃນມາດຕາ 44 ຂອງກົດໝາຍສະບັບນີ້ ຫາກສ້າງຜົນເສຍຫາຍໃຫ້ແກ່ທະນາຄານທຸລະກິດ ຕ້ອງມີຄວາມຮັບຜິດຊອບຮ່ວມກັນ ແລະ ຮັບຜິດຊອບຕາມສ່ວນບຸກຄົນ ຕໍ່ຜົນເສຍຫາຍດັ່ງກ່າວ ເວັ້ນເສຍແຕ່ສະມາຊິກສະພາບໍລິຫານຜູ້ທີ່ບໍ່ເຫັນດີນໍາການປ່ອຍສິນເຊື່ອດັ່ງກ່າວ ໂດຍມີຫຼັກຖານຢັ້ງຢືນຢ່າງເປັນລາຍລັກອັກສອນ.

**ມາດຕາ 85. ມາດຕະການຕໍ່ການລະເມີດຂອງບຸກຄົນ ຫຼື ການຈັດຕັ້ງ**

ບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ກະທໍາໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ລຸ່ມນີ້ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 50.000.000 ກີບ ຫຼື ຈະຖືກດໍາເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກດັ່ງນີ້:

1. ດໍາເນີນທຸລະກິດການທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
2. ນໍາໃຊ້ຄໍາວ່າ"ທະນາຄານ" ຫຼື ຄໍາສັບທີ່ມີຄວາມໝາຍເປັນທະນາຄານ ຢູ່ໃນທຸລະກິດ, ຜະລິດຕະພັນ ຫຼື ການບໍລິການຂອງຕົນ ຊຶ່ງບໍ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນທຸລະກິດການທະນາຄານໂດຍທະນາຄານແຫ່ງ ສປປ ລາວ ນອກຈາກການນໍາໃຊ້ສັບດັ່ງກ່າວ ບໍ່ໄດ້ພົວ ພັນກັບວຽກງານທາງດ້ານການເງິນ-ການທະນາຄານ;
3. ສະໜອງຂໍ້ມູນທີ່ຜິດພາດ ຫຼື ບໍ່ຖືກຕ້ອງ ຫຼື ດໍາເນີນການໃດໜຶ່ງ ທີ່ສ້າງພາບພົດທີ່ບໍ່ດີ ຫຼືກະທໍາການປັ່ນປ່ວນ ເພື່ອຖອນເງິນຝາກ;
4. ໃຫ້ການຍົກເວັ້ນແກ່ທະນາຄານທຸລະກິດ ໃນການປະຕິບັດເງື່ອນໄຂໃດໜຶ່ງ ຂອງກົດໝາຍສະບັບນີ້ ຫຼື ລະບຽບການໃດໜຶ່ງທີ່ວາງອອກ.

**ມາດຕາ 86. ມາດຕະການຕໍ່ການລະເມີດລະບຽບການບັນຊີ**

ຜູ້ບໍລິຫານທະນາຄານທຸລະກິດ ຫຼື ບຸກຄົນອື່ນ ຫາກສ້າງ ຫຼື ບັນທຶກບັນຊີບໍ່ຖືກຕ້ອງ, ປອມແປງ ຫຼື ທຳລາຍບັນຊີຂອງທະນາຄານທຸລະກິດ ຫຼື ລູກຄ້າ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງ ປີ ແລະ ຈະຖືກປັບໃໝແຕ່ 200.000 ກີບ ຫາ 2.000.000 ກີບ.

ໃນກໍລະນີທີ່ການສ້າງ ຫຼື ບັນທຶກບັນຊີບໍ່ຖືກຕ້ອງ, ປອມແປງ ຫຼື ທຳລາຍບັນຊີຂອງທະນາຄານທຸລະກິດ ຫຼື ລູກຄ້າ ຊຶ່ງພາໃຫ້ມີຜົນເສັຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ຫ້າປີ ແລະຈະຖືກປັບໃໝ ແຕ່ 500.000 ກີບ ຫາ 10.000.000 ກີບ.

**ມາດຕາ 87. ມາດຕະການຕໍ່ການສະໜອງຂໍ້ມູນເທັດ**

ບຸກຄົນໃດ ຫາກລາຍງານເທັດ ຫຼື ສະໜອງຂໍ້ມູນເທັດ ຊຶ່ງເປັນຂໍ້ມູນສຳຄັນ ທີ່ເປັນພື້ນຖານໃຫ້ແກ່ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ ຈະຖືວ່າເປັນການກະທຳຜິດທາງອາຍາ ແລະ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ ແລະຈະຖືກປັບໃໝແຕ່ 200.000 ກີບ ຫາ 5.000.000 ກີບ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 88. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 89. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດ ພາຍຫຼັງໜຶ່ງຮ້ອຍຊາວວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ທະນາຄານທຸລະກິດທີ່ສ້າງຕັ້ງຂຶ້ນກ່ອນ ທີ່ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ຕ້ອງດຳເນີນການປັບປຸງແກ້ໄຂ ພາຍໃນກຳນົດເວລາບໍ່ເກີນສາມປີ ນັບແຕ່ກົດໝາຍສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

ຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ
ປະທານ

ທອງສິງ ທຳມະວົງ


ກອງປະຊຸມຜູ້ຖືຮຸ້ນ
ສະພາບໍລິຫານ
ຄະນະກຳມະການ ກວດສອບບັນຊີພາຍໃນ
ຄະນະກຳມະການ ຄຸ້ມຄອງບໍລິຫານ
ຄະນະກຳມະການ ຄຸ້ມຄອງຄວາມສ່ຽງ
ອົງການກວດສອບ ຈາກພາຍນອກ
ຜູ້ອຳນວຍການໃຫຍ່
ຮອງຜູ້ອຳນວຍການໃຫຍ່
ຜູ້ອຳນວຍການການເງິນ
ບັນດາຜູ້ຈັດການຝ່າຍຕ່າງໆ